ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ພະຈິກ 2025
ປີທີ 14
ສະບັບທີ 1041
ລາຍສັປະດາ

## ກອງປະຊຸມສະໄໝສາມັນເທື່ອທີ 10 ໄຂຂຶ້ນຢ່າງເປັນທາງການ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການໃນຕອນເຊົ້າວັນຈັນທີ 10 ພະຈິກນີ້ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານສະ

ອ່ານຕໍ່ໜ້າ 6



ແນວຄິດປະທານ
**ໄກສອນ ພົມວິຫານ**
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ສະພາປະຊາຊົນ ບໍ່ວ່າຈະຢູ່ປະເທດໃດ ແມ່ນບໍ່ມີລະບົບສາຍຕັ້ງຂອງມັນ, ການປົກຄອງຈຶ່ງມີສາຍຕັ້ງ. ສະພາປະຊາຊົນບໍ່ມີຂັ້ນລຸ່ມ, ຂັ້ນເທິງ; ສະພາແຕ່ລະຂັ້ນ ມີຄຸນຄ່າສຳລັບແຕ່ລະເຂດແຄວ້ນຂອງໃຜຂອງມັນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 496)

ກຳນົດໃຫ້ແຈ້ງກ່ຽວກັບພາລະບົດບາດ, ໜ້າທີ່ແລະການແບ່ງງານຂອງແຕ່ລະກະຊວງ, ແຕ່ລະອົງການ, ແຕ່ລະພາກສ່ວນທີ່ຂຶ້ນກັບກະຊວງ; ກຳນົດການພົວພັນລະຫວ່າງຂັ້ນເທິງກັບຂັ້ນລຸ່ມນຳກັນ, ລະຫວ່າງການພົວພັນຕາມສາຍຕັ້ງ, ສາຍຂວາງ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 156)

ອ່ານຕໍ່ສະບັບໜ້າ

## ຜົນກອງປະຊຸມສະໄໝສາມັນຂອງລັດຖະບານປະຈຳເດືອນຕຸລາ



(ສພຊ) - ກອງປະຊຸມສະໄໝສາມັນຂອງລັດຖະບານປະຈຳເດືອນຕຸລາ 2025 ໄດ້ໄຂຂຶ້ນໃນວັນທີ 3 ແລະ ອັດລົງໃນຕອນເຊົ້າວັນທີ 4 ພະຈິກຜ່ານມາ ທີ່ສຳນັກງານນາຍົກລັດຖະມົນຕີ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ, ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຜູ້ຕາງໜ້າກະຊວງ-ອົງການ ເຂົ້າຮ່ວມແບບເຊິ່ງໜ້າ; ການນຳຂອງນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເຂົ້າຮ່ວມຜ່ານລະບົບກອງປະຊຸມທາງໄກ ເພື່ອຮັບຟັງ ແລະ ປະກອບຄຳເຫັນຕໍ່ການສະຫຼຸບວຽກງານປະຈຳເດືອນຕຸລາ ແລະ ທິດທາງແຜນວຽກຈຸດສຸມ

ອ່ານຕໍ່ໜ້າ 9

## ສູ້ຊົນເກັບລາຍຮັບງົບປະມານໃຫ້ໄດ້ບໍ່ຫຼຸດ 20% ຂອງ GDP



(ສພຊ) - ອີງຕາມການລາຍງານຂອງທ່ານນາຍົກລັດຖະມົນຕີສອນໄຊສີພັນດອນກ່ຽວກັບທິດທາງແຜນວຽກຈຸດສຸມປີ 2026 ລັດຖະບານ ຈະສຸມໃສ່ປະຕິບັດດ້ານເສດຖະກິດ:

1) ຄຸ້ມຄອງເສດຖະກິດ

ອ່ານຕໍ່ໜ້າ 8

## ຍົກສູງຄຸນນະພາບດ້ານເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 10




(ສພຊ) - ກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນຂຶ້ນໃນວັນທີ 6-7 ພະຈິກນີ້ ໂດຍການເປັນປະທານເປີດຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ

ອ່ານຕໍ່ໜ້າ 8

## ສຈ. ປອ. ຈະເລີນ ເຢຍປາວເຮີ ເຄື່ອນໄຫວວຽກງານຢູ່ ສພຂ ສະຫວັນນະເຂດ ແລະ ຄຳມ່ວນ



(ສພຊ) - ວັນຈັນທີ 3 ພະຈິກຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ມີກອງປະຊຸມເຝິກອົບຮົມສ້າງຄວາມຮັບຮູ້ພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ມີທ່ານ ບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ, ເລຂາພັກແຂວງ, ບັນດາທ່ານໃນ ຄປຈສພຂ, ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ອົງການລັດທຽບເທົ່າພະແນກຂັ້ນແຂວງ, ເລຂາພັກເມືອງ-ນະຄອນ ແລະ ປະທານຄະນະກຳມະການປົກຄອງເມືອງ-ນະຄອນ 14 ເມືອງ, 1 ນະຄອນ ພ້ອມດ້ວຍຄະນະຮັບ ຜິດຊອບກອງປະຊຸມ

ອ່ານຕໍ່ໜ້າ 7

## ເຫັນດີປັບປຸງດັດຊະນີເງິນເດືອນ, ເງິນນະໂຍບາຍ ແລະ ເງິນອຸດໜູນ



(ສພຊ)-ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເມື່ອວັນທີ 10 ພະຈິກຜ່ານມາ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ,

ອ່ານຕໍ່ໜ້າ 7



ເຄັດລັບຖະໜອມ... (ໜ້າ 9)



ບັງກລາເທດ... (ໜ້າ 11)

ເຝົ້າໄວ້ ໄດ້ຍິນຮອງ
ວິເສດ ສະແຫວງສຶກສາ

ຊຸກຍູ້ສົ່ງເສີມ... (ໜ້າ 12)

**ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

# 12 ວຽກຈຸດສຸມດ້ານເສດຖະກິດ ທີ່ລັດຖະບານສາມາດປະຕິບັດໄດ້

(ສພຊ)-ທ່ານສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ໄດ້ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 5 ປີ ຄັ້ງທີ IX (2021-2025) ແລະ ແຜນປີ 2025 ແລະ ສະເໜີທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ແລະ ແຜນປີ 2026 ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໂດຍສະເພາະຂົງເຂດເສດຖະກິດ ເຊິ່ງສາມາດສັງລວມຜົນສຳເລັດໄດ້ດັ່ງນີ້:

1. ການຂະຫຍາຍຕົວທາງດ້ານເສດຖະກິດ: ຕາມແຜນການ 5 ປີ ກຳນົດ 4.24% ຕໍ່ປີ (ສຳລັບປີ 2025 ຄາດວ່າຈະຂະຫຍາຍຕົວໃນລະດັບ 4.8%), ໃນນີ້: ຂະແໜງກະສິກຳ ຂະຫຍາຍຕົວ 2.9% ກວມເອົາ 19.4% ຂອງ GDP (ແຜນການ 5 ປີ: ຂະຫຍາຍຕົວ 2.5% ກວມເອົາ 15.3% ຂອງ GDP); ຂະແໜງອຸດສາຫະກຳຂະຫຍາຍຕົວ 4.7% ກວມເອົາ 32.5% ຂອງ GDP (ແຜນການ 5 ປີ: ຂະຫຍາຍຕົວ 4.1% ກວມເອົາ 32.3% ຂອງ GDP); ຂະແໜງບໍລິການ ຂະຫຍາຍຕົວ 4.5% ກວມເອົາ 36.6% ຂອງ GDP (ແຜນການ 5 ປີ: ຂະຫຍາຍຕົວ 6% ກວມເອົາ 41.3% ຂອງ GDP) ແລະ ພາສີອາກອນຜະລິດຕະພັນສຸດທິ ຂະຫຍາຍຕົວ 3.8% ກວມເອົາ 11.5% ຂອງ GDP (ແຜນການ 5 ປີ: ຂະຫຍາຍຕົວ 5.8% ກວມເອົາ 11.7% ຂອງ GDP).

2. ການປະຕິບັດແຜນງົບປະມານແຫ່ງລັດ: ສາມາດເກັບລາຍຮັບໄດ້ເກີນແຜນ 5 ປີ ຊ້ອນ, ການຂາດດຸນງົບປະມານຫຼຸດລົງ ແລະ ກ້າວໄປສູ່ການເກີນດຸນ ຈາກຂາດດຸນ 1% ມາເປັນເກີນດຸນ 1.4% ຫຼື ຈາກຂາດດຸນ 10,500 ຕື້ກີບ ມາເປັນເກີນດຸນ 18,385.75 ຕື້ກີບ ໜີ້ສິນຫຼຸດລົງຈາກ 112% ຂອງ GDP ໃນປີ 2022 ມາເປັນປະມານ 88% ຂອງ GDP ໃນປີ 2025 ສັງລວມໄດ້ດັ່ງນີ້:

1) ດ້ານລາຍຮັບງົບປະມານ: 5 ປີຜ່ານມາ ປະຕິບັດໄດ້ 251,910.8 ຕື້ກີບ ເທົ່າກັບ 140% ຂອງແຜນການ 5 ປີ ຫຼື ເທົ່າກັບ 18.65 % ຂອງ GDP (ແຜນການ 5 ປີ: ໃຫ້ໄດ້ 179,500 ຕື້ກີບ ຫຼື ເທົ່າກັບ 17% ຂອງ GDP); ສຳລັບປີ 2025 ປະຕິບັດໄດ້ 60,580 ຕື້ກີບ ເທົ່າກັບ 86% ຂອງແຜນການປີ ຫຼື ເທົ່າກັບ 14.62% ຂອງ GDP; ຄາດຄະເນໝົດປີ 2025 ຈະສາມາດຈັດເກັບລາຍຮັບໄດ້ 77,607 ຕື້ກີບ ເທົ່າກັບ 114% ຂອງແຜນການປີ ເທົ່າກັບ 20% ຂອງ GDP (ເກີນແຜນປະມານ 9,508 ຕື້ກີບ).

2) ດ້ານລາຍຈ່າຍງົບປະມານ: ໄລຍະ 5 ປີ ສາມາດປະຕິບັດລາຍຈ່າຍໄດ້ 233,515.02 ຕື້ກີບ ເທົ່າກັບ 123% ຂອງແຜນການ 5 ປີ ຫຼື ເທົ່າກັບ 17.27% ຂອງ GDP (ແຜນການ 5 ປີ: 190,000 ຕື້ກີບ ຫຼືເທົ່າກັບ 18% ຂອງ GDP); ປີ 2025 ປະຕິບັດໄດ້ 49,083 ຕື້ກີບ ເທົ່າກັບ 68% ຂອງແຜນການປີ ຫຼື ເທົ່າກັບ 12.51% ຂອງ GDP, ຄາດຄະເນແຜນລາຍຈ່າຍໝົດປີ 2025 ຈະປະຕິບັດໄດ້ຕາມແຜນການທີ່ສພຊ ຮັບຮອງ (71,850 ຕື້ກີບເທົ່າກັບ 19,16% GDP).

-ການແກ້ໄຂໜີ້ສິນຕ່າງປະເທດ ໄລຍະປີ 2021-2024 ສາມາດແກ້ໄຂໜີ້ການລົງທຶນຂອງລັດໄດ້ 19,871.81 ຕື້ກີບ ແລະ ໄດ້ຄົ້ນຄວ້ານະໂຍບາຍຫັນໜີ້ເປັນທຶນ, ຄົ້ນຄວ້າຮູບແບບການແກ້ໄຂໜີ້ສິນແບບມີສ່ວນຫຼຸດ ໂດຍນຳໃຊ້ເງິນເກີນແຜນບ້ວງ 50% ປີ 2024 ຂອງສູນກາງ ຈຳນວນ 800 ຕື້ກີບ ໄປພ້ອມໆກັບການຈັດສັນງົບປະມານການລົງທຶນຂອງລັດ ພາກປົກກະຕິ.

3. ການຮັກສາສະຖຽນລະພາບດ້ານເງິນຕາ: ຮັກສາສະຖຽນລະພາບໃຫ້ຄ່າເງິນກີບ, ສ້າງຄວາມເຂັ້ມແຂງໃຫ້ແກ່ຄັງສຳຮອງເງິນຕາຕ່າງປະເທດ, ຄວບຄຸມອັດຕາເງິນເຟີ້ແລະຄຸ້ມຄອງອັດຕາແລກປ່ຽນໃຫ້ມີຄວາມໝັ້ນທ່ຽງເຮັດໃຫ້ອັດຕາເງິນເຟີ້ຫຼຸດລົງ; ປັດຈຸບັນ ສາມາດຢັບຢັ້ງອັດຕາແລກປ່ຽນໃຫ້ມີຄວາມສະຖຽນ ເຮັດໃຫ້ສ່ວນຕ່າງລະຫວ່າງອັດຕາແລກປ່ຽນໃນລະບົບ ແລະ ນອກລະບົບ ຫຍັບເຂົ້າໃກ້ກັນ; ຮອດປັດຈຸບັນ ຄັງສຳຮອງເງິນຕາຕ່າງປະເທດ ສາມາດກຸ້ມການນຳເຂົ້າ ໄດ້ 5.12 ເດືອນ (ຄາດໝາຍ ສພຊ ແມ່ນ 3 ເດືອນ); ໄດ້ດຳເນີນນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ລວມວົງເງິນກູ້ຢືມຈາກທະນາຄານກາງ 4,755.20 ຕື້ກີບ; ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ໄດ້ອະນຸມັດວົງເງິນ 2,240.39 ຕື້ກີບ, ໄດ້ເບີກຖອນເງິນກູ້ຕົວຈິງ 2,104.75 ຕື້ກີບ ກວມເອົາ 93.95%.



4. ການຮັກສາສະຖຽນລະພາບດ້ານລາຄາສິນຄ້າ: ລັດຖະບານໄດ້ມີການປັບປຸງໂຄງສ້າງລາຄານ້ຳມັນເຊື້ອໄຟ ໂດຍຕັດຄ່າກອງທຶນທາງ, ຄ່າຍອດສານມາກເກີ, ຄ່າທຳນຽມການກວດກາຄຸນນະພາບ, ປະລິມານນ້ຳມັນ ແລະ ກອງທຶນນ້ຳມັນອອກຈາກໂຄງສ້າງລາຄານ້ຳມັນ ໂດຍໃຫ້ກະຊວງການເງິນ ຈັດເກັບພາສີ-ອາກອນຕາມກົດໝາຍ ແລະ ຂຶ້ນແຜນງົບປະມານໃນແຕ່ລະປີໃຫ້ແກ່ວຽກຕ່າງໆ.

5. ການຜະລິດກະສິກຳເປັນສິນຄ້າ: 5 ປີຜ່ານມາ ການຜະລິດເຂົ້າເປືອກປະຕິບັດໄດ້ 18.91 ລ້ານໂຕນ (ແຜນການ 5 ປີ: 3.5-4 ລ້ານໂຕນຕໍ່ປີ), ສະເພາະປີ 2025 ໄດ້ 3.77 ລ້ານໂຕນ ເທົ່າກັບ 96.6% ຂອງແຜນການປີ (ແຜນການປີ 3.9 ລ້ານໂຕນ); ຜະລິດພືດສະບຽງອາຫານ ປະຕິບັດໄດ້ 2.41 ລ້ານກວ່າໂຕນຕໍ່ປີ (ແຜນການ 5 ປີ: ສະເລ່ຍ 2.12 ລ້ານໂຕນຕໍ່ປີ); ຜະລິດພືດເປັນສິນຄ້າ ປະຕິບັດໄດ້ 9.57 ລ້ານກວ່າໂຕນຕໍ່ປີ (ແຜນການ 5 ປີ: ສະເລ່ຍ 7.4 ລ້ານໂຕນຕໍ່ປີ), ສຳລັບປີ 2025 ບັນລຸໄດ້ 12.37 ລ້ານໂຕນ ລື່ນຄາດໝາຍ 30.21% (ແຜນການແມ່ນ 9.5 ລ້ານໂຕນ); ສົ່ງອອກຜົນຜະລິດກະສິກຳ ໃນ 5 ປີ ປະຕິບັດໄດ້ 7,890 ລ້ານໂດລາ ຫຼື ສະເລ່ຍເທົ່າກັບ 1,578 ລ້ານໂດລາຕໍ່ປີ ລື່ນແຜນການ 31.49% (ແຜນການ 5 ປີ: 1,200 ລ້ານໂດລາຕໍ່ປີ). ສະເພາະ 10 ເດືອນ ປີ 2025 ປະຕິບັດໄດ້ 1,507.72 ລ້ານໂດລາ ລື່ນແຜນການ 0.51% (ແຜນການຕາມ ສພຊ ຮັບຮອງ 1,500 ລ້ານໂດລາ). ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປະ ຕິບັດໄດ້ 14,961 ຕື້ກີບ ເທົ່າກັບ 76.22% ຂອງແຜນການ, ເພີ່ມຂຶ້ນ 11.58% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາແລະໝົດປີຄາດວ່າຈະບັນລຸໄດ້ຕາມແຜນການປີ ຄື 19,629 ຕື້ກີບ.

6. ດ້ານການລົງທຶນ: ໃນ 5 ປີ ລະດົມທຶນໄດ້ 342,406 ຕື້ກີບ ເທົ່າກັບ 167% ຂອງແຜນການ 5 ປີ (ແຜນການ 5 ປີ 204,599 ຕື້ກີບ), ໃນນີ້: ການລົງທຶນຈາກງົບປະມານຂອງລັດພາຍໃນປະຕິບັດໄດ້ 22,080 ຕື້ກີບ ເທົ່າກັບ 96% ຂອງແຜນການ 5 ປີ (ແຜນການ 5 ປີ 22,950 ຕື້ກີບ), ສະເພາະ 10 ເດືອນ ປີ 2025 ບັນລຸໄດ້ 3,924.5 ຕື້ກີບ ເທົ່າກັບ 57% ຂອງແຜນການປີ (ແຜນການປີ 6,250 ຕື້ກີບ); ການລົງທຶນຂອງລັດຈາກ ODA ປະຕິບັດໄດ້ 54,493 ຕື້ກີບ ເທົ່າກັບ 146% ຂອງແຜນການ 5 ປີ (ແຜນການ 5 ປີ 37,344 ຕື້ກີບ) ສະເພາະປີ 2025 ປະຕິບັດໄດ້ 7,092.56 ຕື້ກີບ ເທົ່າກັບ 38.77% ຂອງແຜນການປີ (ແຜນການປີ 18,300 ຕື້ກີບ) ແລະ ການລົງທຶນຈາກເອກະຊົນພາຍໃນ ແລະ ຈາກຕ່າງປະເທດ ປະຕິບັດໄດ້ 266,494 ຕື້ກີບ ເທົ່າກັບ 266% ຂອງແຜນການ 5 ປີ (ແຜນການ 5 ປີ 100,000 ຕື້ກີບ), ສະເພາະ 10 ເດືອນ ປີ 2025 ໄດ້ອະນຸມັດການລົງທຶນມີມູນຄ່າ 5,183.66 ລ້ານໂດລາເຊິ່ງເຫັນວ່າມີທ່າອ່ຽງເພີ່ມຂຶ້ນ.

7. ການຄຸ້ມຄອງໂຄງການບໍ່ແຮ່: ໄລຍະ 3 ປີ ສາມາດສ້າງລາຍຮັບໄດ້ 5,024 ລ້ານໂດລາ ຫຼື ເທົ່າກັບ 61,039 ຕື້ກີບ ເທົ່າກັບ 64.14% ຂອງແຜນການ; ການຜະລິດແຮ່ທາດປະຕິບັດໄດ້ 169,488 ຕື້ກີບ ເທົ່າກັບ 202.06% ຂອງແຜນການ 5 ປີ (ແຜນການ 5 ປີ: 56,111 ຕື້ກີບ), ຈຳໜ່າຍແຮ່ທາດທັງພາຍໃນ ແລະ ຕ່າງປະເທດປະຕິບັດໄດ້ 13,370 ລ້ານໂດລາ ເທົ່າກັບ 160.39% ຂອງແຜນການ 5 ປີ (ແຜນການ 5 ປີ: 8,336 ລ້ານໂດລາ); ໄລຍະ 10 ເດືອນ ປີ 2025 ສາມາດຜະລິດແຮ່ທາດໄດ້ 36,175 ຕື້ກີບ ເທົ່າກັບ 104% ຂອງແຜນກາ, ເພີ່ມຂຶ້ນ 5% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ແລະ ໝົດປີຄາດວ່າຈະສາມາດປະຕິບັດໄດ້ 44,833 ຕື້ກີບ ເທົ່າກັບ 129% ຂອງແຜນການ (ມະຕິ ສພຊ: 34,630 ຕື້ກີບ).

8. ດ້ານພະລັງງານ: ໄລຍະ 5 ປີ ສາມາດຜະລິດພະລັງງານໄຟຟ້າໄດ້ 251,052 ລ້ານກິໂລວັດໂມງ ເທົ່າກັບ 90.93% ຂອງແຜນການ 5 ປີ (ແຜນການ 5 ປີ: 276,096 ລ້ານກິໂລວັດໂມງ) ຄິດເປັນມູນຄ່າ 259,603 ຕື້ກີບເທົ່າກັບ 184.27% ຂອງແຜນການ 5 ປີ (ແຜນການ 5 ປີ: 140,879 ຕື້ກີບ); ໃນໄລຍະ 10 ເດືອນ ປີ 2025 ສາມາດຜະລິດໄດ້ 41,777 ລ້ານກິໂລວັດໂມງ ເທົ່າກັບ 78.15% ຂອງແຜນການ, ໝົດປີຄາດວ່າຈະປະຕິບັດໄດ້ 56,370 ລ້ານກິໂລວັດໂມງເທົ່າກັບ 105.45% ຂອງແຜນການ ຄິດເປັນມູນຄ່າ 73,123 ຕື້ກີບ; ການສົ່ງອອກກະແສໄຟຟ້າໄປຕ່າງປະເທດໄດ້ 195,602 ລ້ານກິໂລວັດໂມງ ເທົ່າກັບ 117.71% ຂອງແຜນການ 5 ປີ (ແຜນການ 5 ປີ: ໃຫ້ໄດ້ 128,721 ລ້ານກິໂລວັດໂມງ).

9. ການປະຕິຮູບລັດວິສາຫະກິດ: ໄດ້ສຸມໃສ່ປະຕິຮູບ 4 ລັດວິສາຫະກິດໃຫຍ່ຄື: ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດການບິນລາວ, ລັດວິສາຫະກິດນ້ຳມັນເຊື້ອໄຟລາວ ແລະທະນາຄານນະໂຍບາຍເຊິ່ງມີຄວາມຄືບໜ້າພໍສົມຄວນ.

10. ການປັບປຸງ ແລະ ຍົກລະດັບໂຄງລ່າງພື້ນຖານຄົມມະນາຄົມ ແລະ ຂົນສົ່ງ: 5 ປີຜ່ານມາສາມາດຍົກລະດັບເສັ້ນທາງໄດ້ 443.89 ກມ ເທົ່າກັບ 80.70% ຂອງແຜນການ 5 ປີ (ແຜນການ 5 ປີ: ໃຫ້ໄດ້ 550 ກມ). ປັດຈຸບັນ, ກຳລັງສຸມໃສ່ຈັດຕັ້ງປະຕິບັດເສັ້ນທາງຫຼວງແຫ່ງຊາດສາຍຫຼັກ ໂດຍມອບໃຫ້ອົງການປົກຄອງທ້ອງຖິ່ນເປັນເຈົ້າການໃນການຈັດຕັ້ງປະຕິບັດຕົວຈິງ; ສຳເລັດການກໍ່ສ້າງໂຄງການຂົວຂ້າມນ້ຳຂອງ 2 ແຫ່ງເຊັ່ນ: ຂົວມິດຕະພາບລາວ-ໄທ ແຫ່ງທີ V (ປາກຊັນ-ບຶງການ) ແລະ ຂົວຂ້າມນ້ຳຂອງກ້ອນຕື້ນ-ຫ້ວຍແກ້ວ, ແຂວງບໍ່ແກ້ວ; ໄດ້ເອົາໃຈໃສ່ກໍ່ສ້າງໂຄງການກັນເຈື່ອນຕາມແຄມແມ່ນ້ຳຂອງ ແລະ ນ້ຳເຫືອງ ທີ່ເປັນຊາຍແດນລະຫວ່າງປະເທດ ແລະ ແມ່ນ້ຳສາຂາ ແລະ ໄດ້ເປີດໃຫ້ບໍລິການສະໜາມບິນພາຍໃນໜອງຄ້າງ ແຂວງຫົວພັນ ໃນປີ 2023, ສະໜາມບິນສາກົນແຫ່ງທີ 5 ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ ໃນປີ 2024. ການບໍລິການຂົນສົ່ງສິນຄ້າ ປະຕິບັດໄດ້ 59.2 ລ້ານໂຕນ ຫຼື ເທົ່າກັບ 130.66% ຂອງແຜນການ 5 ປີ (45.30 ລ້ານໂຕນ), ສະເພາະປີ 2025 ປະຕິບັດໄດ້ 15.52 ລ້ານໂຕນ ເທົ່າກັບ 103,6% ຂອງແຜນການປີ (14.97 ລ້ານໂຕນ); ການຂົນສົ່ງສິນຄ້າທາງລົດໄຟ (ລາວ-ຈີນ ແລະ ລາວ-ໄທ) ປະຕິບັດໄດ້ 16.16 ລ້ານໂຕນ ແລະ ການຂົນສົ່ງໂດຍສານ ປະຕິບັດໄດ້ 11.75 ລ້ານເທື່ອຄົນ.

11. ຂຶ້ນທະບຽນອອກໃບຕາດິນ: ແຕ່ປີ 2021 ຮອດເດືອນ 10 ປີ 2025 ຂຶ້ນທະບຽນອອກໃບຕາດິນໄດ້ 740.198 ຕອນເທົ່າກັບ 46% ຂອງແຜນການ (ແຜນການ 5 ປີ: 1.6 ລ້ານຕອນ), ສະເພາະ 10 ເດືອນຜ່ານມາປະຕິບັດໄດ້ 139,057 ຕອນ ເທົ່າກັບ 46.35% ຂອງແຜນການ (ແຜນການ: 300,000 ຕອນ); ໄດ້ສຳຫຼວດວັດແທກຕອນດິນລໍຖ້າອອກໃບຕາດິນ 47,508 ຕອນ (ຂໍ້ມູນຮອດເດືອນກັນຍາ 2025); ໄດ້ດຳເນີນການຫັນລະບົບຄຸ້ມຄອງທີ່ດິນເປັນທັນສະໄໝ ໂດຍໄດ້ສຳເລັດການສະແກນຂໍ້ມູນສຳນວນຕອນດິນຈາກລະບົບເຈ້ຍ ເປັນລະບົບດີຈີຕອນ ໄດ້ 430,000 ຕອນ.

12. ການແກ້ໄຂຜົນການກວດສອບ: ໄດ້ແກ້ໄຂຜົນການກວດສອບ ໂດຍໄດ້ມອບເຂົ້າງົບປະມານແຫ່ງລັດ 3.335,60 ຕື້ກີບ; ດ້ວຍການຈິດຮັບ-ຈິດຈ່າຍ ຈຳນວນ 172,51 ຕື້ກີບ, ເກັບກູ້ໄດ້ແລະມອບເຂົ້າງົບປະມານ ຈຳນວນ 1.693,35 ຕື້ກີບ.

# ການແກ້ໄຂບັນຫາຄູອາສາສະໝັກ ແລະ ຜົນສຳເລັດຂົງເຂດຍຸຕິທຳ



(ສພຊ)-ຕາມການລາຍງານຂອງທ່ານນາຍົກລັດຖະມົນຕີ ສອນໄຊ ສີພັນດອນ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 5 ປີ ຄັ້ງທີ IX (2021-2025) ແລະ ແຜນປີ 2025 ແລະ ສະເໜີທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ແລະ ແຜນປີ 2026 ໂດຍສະເພາະວຽກງານຂົງເຂດວັດທະນະທຳ-ສັງຄົມ ແລະ ຂົງເຂດຍຸຕິທຳ ເຊິ່ງທ່ານໃຫ້ຮູ້ວ່າ:

1)ວຽກງານສຶກສາແລະກິລາ: ໃນປີ 2025 ໄດ້ບັນຈຸຄູອາສາສະໝັກທີ່ໄດ້ຮັບເງິນອຸດໜູນພື້ນຖານຈາກລັດຖະບານ 4,234 ຄົນ ເຂົ້າເປັນລັດຖະກອນໃນໂກຕາຂອງກະຊວງປ້ອງກັນປະເທດ 2 ພັນຄົນ ແລະ ໂກຕາລັດຖະ ກອນໃໝ່ຂອງລັດຖະບານ 2 ພັນຄົນ ລວມເປັນ 4 ພັນຄົນ, ການແກ້ໄຂບັນຫາຄູອາສາສະໝັກແມ່ນສຳເລັດໂດຍພື້ນຖານ; ໄດ້ປັບປຸງຫຼັກສູດລະບົບສາຍສາມັນສຶກສາ (ຊັ້ນປະຖົມ 6 ປີ, ມັດທະຍົມຕອນຕົ້ນ 3 ປີ ແລະ ມັດທະຍົມຕອນປາຍ 3 ປີ ຫຼື ລະບົບ 6+3+3), ຄາດວ່າຈະເລີ່ມນຳໃຊ້ໃນສົກຮຽນປີ 2028-2029; ປະກາດໃຊ້ຍຸດທະສາດ ແລະ ແຜນພັດທະນາວິທະຍາສາດ, ເຕັກໂນໂລຊີແລະນະວັດຕະກຳແຫ່ງຊາດ ໄລຍະປີ 2026-2040; ສຳເລັດການປັບປຸງກອງທຶນວິທະຍາສາດ, ລະບຽບການຄຸ້ມຄອງແຫຼ່ງກຳເນີດລັງສີ ແລະ ສ້າງສະຖານນີວັດແທກຄ່າລັງສີໃນສິ່ງແວດລ້ອມ ແລະການຄົ້ນຄວ້າວິທະຍາສາດຂະແໜງການຕ່າງໆ; ການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ຫຼິ້ນກິລາ ກາຍຍະກຳ ເພີ່ມຈາກ 30% ໃນປີ 2020ເປັນ50% ໃນປີ2025; ສຳເລັດການຈັດງານມະຫະກຳກິລາແຫ່ງຊາດ ຄັ້ງທີ 11, ກິລາຄົນພິການຄັ້ງທີ 3 ຢູ່ແຂວງຊຽງຂວາງ, ກິລານັກຮຽນມັດທະຍົມທົ່ວປະເທດຄັ້ງທີ 7 ຢູ່ແຂວງສາລະວັນ ແລະ ກະກຽມເປີດງານແຂ່ງຂັນກິລາແຫ່ງຊາດ ຄັ້ງທີ 12 ແລະ ກິລາຄົນພິການ ຄັ້ງທີ 4 ຢູ່ນະຄອນຫຼວງວຽງຈັນ.

2) ວຽກງານສາທາລະນະສຸກ: ປັບປຸງຄຸນນະພາບການບໍລິການສາທາລະນະສຸກໃນສະຖານທີ່ບໍລິການສາທາລະນະສຸກຂອບເຂດທົ່ວປະເທດ ຕາມນະໂຍບາຍ 5 ດີ 1 ພໍໃຈ; ໄດ້ສຸມໃສ່ການກໍ່ສ້າງ-ປັບປຸງພື້ນຖານໂຄງລ່າງ, ປະກອບບຸກຄະລາກອນ ແລະ ອຸປະກອນການແພດທີ່ທັນສະໄໝ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ; ໄດ້ຍົກລະດັບການບໍລິການປິ່ນປົວສະເພາະທາງທີ່ທັນສະໄໝຂອງໂຮງໝໍຂັ້ນສູນກາງ; ໄດ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງລະບົບເຝົ້າລະວັງພະຍາດ; ໄດ້ເອົາໃຈໃສ່ຕິດຕາມກວດກາຄຸນນະພາບອາຫານ, ຢາ ແລະ ຜະລິດຕະພັນການແພດທີ່ນຳເຂົ້າ ແລະ ຈໍລະຈອນ ຈຳໜ່າຍຢູ່ທ້ອງຕະຫຼາດ; ໄດ້ສົ່ງເສີມການຜະລິດອາຫານ, ຢາ ແລະ ຜະລິດຕະພັນການແພດ ຕາມມາດຕະຖານ ເພື່ອສາມາດຕອບສະໜອງຄວາມຕ້ອງການພາຍໃນ ທັງເປັນການທົດແທນການນຳເຂົ້າ ແລະ ສົ່ງອອກຈຳນວນໜຶ່ງ.

3) ວຽກງານແຮງງານ ແລະ ສະຫວັດດີການສັງຄົມ: ພັດທະນາສີມືແຮງງານໃຫ້ມີຄຸນນະພາບດີຂຶ້ນ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດແຮງງານໃນຮູບແບບຕ່າງໆ ໄດ້ 184,825 ຄົນ; ສົ່ງເສີມການຈັດຫາວຽກເຮັດງານທຳເຂົ້າສູ່ຕະຫຼາດແຮງງານພາຍໃນ ແລະຕ່າງປະເທດໄດ້464,514 ຄົນ ລື່ນແຜນການ 18.43% (ແຜນການ 5 ປີ: 392,197 ຄົນ), ສະເພາະ 10 ເດືອນ ປີ 2025 ປະຕິບັດໄດ້ 131,243 ຄົນ ເທົ່າກັບ 282.26% ຂອງແຜນການປີ; ຂຶ້ນທະບຽນແຮງງານລາວ ທີ່ຕ້ອງການມີວຽກເຮັດງານທຳຢູ່ພາຍໃນແລະຕ່າງປະເທດ ໃນໄລຍະ 5 ປີ ປະຕິບັດໄດ້ 484,487 ຄົນ, ສະເພາະ 10 ເດືອນ ປີ 2025 ປະຕິບັດໄດ້ທັງໝົດ 149,472 ຄົນ; ໄດ້ປັບປຸງ ແລະ ເປີດນຳໃຊ້ລະບົບຖານຂໍ້ມູນການຂຶ້ນທະບຽນແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປລາວ ເຊິ່ງສາມາດຂຶ້ນທະບຽນແຮງງານຕ່າງປະເທດໄດ້ 73,707 ຄົນ ສາມາດເກັບລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ໄດ້ 74.04 ຕື້ກີບ, ສະເພາະ 10 ເດືອນ ປີ 2025 ສາມາດຂຶ້ນທະບຽນແຮງງານຕ່າງປະເທດ ໄດ້ 32,297 ຄົນ ເຊິ່ງສາມາດເກັບລາຍຮັບ ໄດ້ທັງໝົດ 32.52 ຕື້ກີບ; ແກ້ໄຂຊ່ວຍເຫຼືອສຸກເສີນຂອບເຂດທົ່ວປະເທດ ເປັນເງິນ 67,013.71 ລ້ານກວ່າກີບ; ຄົ້ນ ຄວ້າງົບປະມານແກ້ໄຂຟື້ນຟູສຸກເສີນໄພພິບັດ 190 ໂຄງການ ມູນຄ່າ335.34 ຕື້ກີບ, ສະເພາະ 10 ເດືອນປີ 2025 ໄດ້ໃຫ້ການຊ່ວຍເຫຼືອແກ້ໄຂສຸກເສີນແກ່ປະຊາຊົນ ມູນຄ່າ 43.45 ຕື້ກີບ; ຄົ້ນຄວ້າຈັດຕັ້ງປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ໃນ 5 ເປົ້າໝາຍບຸລິມະສິດ ໄດ້ 10,638 ທ່ານເປັນເງິນ 222.59 ຕື້ກວ່າກີບ ເທົ່າກັບ 66.49% ຂອງແຜນການ 5 ປີ (16 ພັນທ່ານ), ສະເພາະປີ 2025 ປະຕິ ບັດໄດ້ 5,940 ທ່ານ ເທົ່າກັບ 490,50% ຂອງແຜນການປີ ເປັນເງິນ 120.16 ຕື້ກີບ, ລື່ນແຜນການ 5 ປີ 14.73% (ແຜນການ 5 ປີ: 950 ທ່ານ).

4) ວຽກງານຖະແຫຼງຂ່າວ: ໄດ້ພະຍາຍາມປັບປຸງ, ຍົກລະດັບເຄື່ອງມືວຽກງານຖະແຫຼງຂ່າວ, ການອອກຂ່າວ ໃຫ້ເປັນທັນສະໄໝດ້ວຍຫຼາຍຊ່ອງທາງ; ຜ່ານການຈັດຕັ້ງປະຕິບັດ ເຮັດໃຫ້ການອອກຂ່າວທັນສະພາບກວ່າເກົ່າ ແລະ ສາມາດຕີຖອຍເປັນກ້າວໆບັນດາສື່ສັງຄົມທີ່ອອກຂ່າວບິດເບືອນຄວາມຈິງ, ສ້າງຄວາມປັ່ນປ່ວນໃນສັງຄົມ, ໃສ່ຮ້າຍປ້າຍສີ ແລະ ທັບຖົມໂຈມຕີພັກ-ລັດເຮົາ.

5) ໄດ້ສຸມໃສ່ປັບປຸງ ແລະ ກໍ່ສ້າງບັນດາໂຄງລ່າງພື້ນຖານທີ່ຈຳເປັນຢູ່ເຂດຊົນນະບົດ, ເຂດຫ່າງໄກສອກຫຼີກ, ເຂດລຽບຕາມຊາຍແດນ ແລະ ເຂດຈຸດສຸມພັດທະນາຊົນນະບົດໃໝ່ຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ໄດ້ດຳເນີນການປະເມີນຄວາມຄືບໜ້າການຈັດຕັ້ງປະຕິບັດດຳລັດ 348/ລບ ວ່າດ້ວຍການປະຕິບັດມາດຕະຖານການພົ້ນທຸກ ແລະ ການພັດທະນາ ຄາດວ່າຈະສຳເລັດໃນທ້າຍປີ 2025.

ສຳລັບຂົງເຂດຍຸຕິທຳ: ໄລຍະປີ 2021-2025 ມີຄຳຕັດສິນເຂົ້າໃໝ່39,450ເລື່ອງ ສາມາດປະຕິບັດສຳເລັດ ແລະ ປິດການປະຕິບັດ 10,949 ເລື່ອງ ເທົ່າກັບ 27,75% ຂອງຈຳນວນຄຳຕັດສິນເຂົ້າໃໝ່, ອອກຄຳສັ່ງໂຈະການປະຕິບັດ4,297 ເລື່ອງ, ພວມຈັດຕັ້ງປະຕິບັດ 61,936 ເລື່ອງ; ສຳລັບປີ2025 ມີຄຳຕັດສິນເຂົ້າໃໝ່ 6,695 ເລື່ອງ, ປະຕິບັດສຳເລັດ 1.815 ເລື່ອງ, ສົ່ງອົງການໄອຍະການ 74 ເລື່ອງ, ອອກຄຳສັ່ງໂຈະການປະຕິບັດ 902 ເລື່ອງ.

# ສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ພາລະບົດບາດ ສພຊ ແລະ ສພຂ

(ສພຂ) - ວັນທີ 3-4 ພະຈິກຜ່ານມາ ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງແຂວງໄຊຍະບູລີໄດ້ມີກອງປະຊຸມເຝິກອົບຮົມເພື່ອຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ພາລະບົດບາດຂອງສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ມີທ່ານ ເພັງນີລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ພ້ອມດ້ວຍບັນດາທ່ານຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ອົງການລັດທຽບເທົ່າພະແນກຂັ້ນແຂວງ, ເລຂາພັກເມືອງ ແລະ ປະທານຄະນະກຳມະການປົກຄອງເມືອງ 11 ເມືອງ, ພະນັກງານຈາກ ສພຊ ແລະ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.



ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນກ່າວເປີດວ່າ: ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອເຜີຍແຜ່, ໂຄສະນາກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ແນໃສ່ສ້າງຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານດັ່ງກ່າວ ໃຫ້ມີຄວາມເລິກເຊິ່ງ; ເປັນການຊຸກຍູ້, ແນະນຳ ແລະ ສ້າງຄວາມເປັນເອກະພາບກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງແລະບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ, ການກະກຽມໃຫ້ແກ່ການດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ທັງເປັນຂໍ້ມູນ, ບ່ອນອີງ ໃຫ້ແກ່ການຄົ້ນຄວ້າ, ປັບປຸງກົງຈັກການຈັດຕັ້ງຂອງສະພາໃນຊຸດຕໍ່ໄປ ໃຫ້ເປັນລະບົບ, ມີຄວາມເປັນເອກະພາບແລະສອດຄ່ອງກັບກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງເພື່ອຮັບປະກັນໃຫ້ແກ່ການເສີມຂະຫຍາຍ ແລະ ການຍົກສູງບົດບາດການນຳພາຂອງພັກເວົ້າລວມ ໂດຍສະເພາະການຍົກສູງບົດບາດຂອງສະພາ ໃຫ້ມີຄວາມເຂັ້ມແຂງ, ເລິກເຊິ່ງ, ຮອບດ້ານ ສົມຄູ່ກັບການເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ. ທ່ານຍັງຮຽກຮ້ອງບັນດາທ່ານທີ່ເຂົ້າຮ່ວມຈົ່ງເອົາໃຈໃສ່ຕິດຕາມຮັບຟັງການສະເໜີບົດຮຽນແຕ່ລະເນື້ອໃນທີ່ໄດ້ກ່າວມານັ້ນ ເພື່ອໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ, ບັນຫາໃດທີ່ບໍ່ທັນເຂົ້າໃຈຫຼືບໍ່ທັນຈະແຈ້ງກໍໃຫ້ມີການສະເໜີຖາມ ແລະ ປຶກສາຫາລືແລກປ່ຽນບົດຮຽນນຳກັນ ເພື່ອຄວາມຮັບຮູ້ ແລະ ຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍ.

ທ່ານ ສຸບັນ ສະອະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ສະເໜີບົດຮຽນໃນຫົວຂໍ້ການຍົກສູງພາລະບົດບາດໃນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ແນະນຳກ່ຽວກັບການຄົ້ນຄວ້າໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ, ການກະກຽມແລະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຊຸດຕໍ່ໄປ. ຈາກນັ້ນ, ຜູ້ແທນກອງປະຊຸມ ໄດ້ເປັນເຈົ້າການແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກວ້າງຂວາງ ແລະ ກົງໄປກົງມາ, ສົມທຽບໃສ່ການເຄື່ອນໄຫວວຽກງານຕົວຈິງໃນໄລຍະຜ່ານມາໂດຍສະເພາະບັນຫາຫຍຸ້ງຍາກ ເປັນຕົ້ນແມ່ນດ້ານບຸກຄະລາກອນທີ່ຈະເປັນເສນາທິການ ບັນຈຸຊ່ວຍວຽກຢູ່ຂັ້ນເມືອງໃນຕໍ່ໜ້າ ຍັງມີຄວາມຫຍຸ້ງຍາກຫຼາຍ ເນື່ອງຈາກບຸກຄະລາກອນມີຈຳກັດ, ດ້ານງົບປະມານ ແລະ ພາຫະນະ ຮັບໃຊ້ໃນການເຄື່ອນໄຫວວຽກງານຕົວຈິງ ຍັງມີຈຳກັດ ບວກໃສ່ຄວາມຮັບຮູ້, ເຂົ້າໃຈຂອງສັງຄົມ ຕໍ່ວຽກງານສະພາ ຍັງບໍ່ຫຼາຍ.

# ກອງປະຊຸມຄົບຄະນະກຳມາທິການການຕ່າງປະເທດ




(ສພຊ) - ກອງປະຊຸມຄົບຄະນະຂອງກຳມາທິການການຕ່າງປະເທດ (ກຕທ) ປະຈຳປີ 2025 ໄດ້ດຳເນີນໃນວັນທີ 1-2 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ, ເຂົ້າຮ່ວມມີທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ບັນດາທ່ານປະທານແລະຮອງປະທານກຳມາທິການ ສພຊ, ທ່ານລັດຖະມົນຕີກະຊວງການຕ່າງປະເທດ, ທ່ານຮອງລັດຖະມົນຕີກະຊວງການເງິນ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກຕທ; ທ່ານຮອງປະທານຄະນະກຳມະການຮ່ວມມື ລາວ-ຫວຽດນາມ, ທ່ານຮອງປະທານຄະນະກຳມະການຮ່ວມມື ລາວ-ຈີນ ພ້ອມດ້ວຍຜູ້ຕາງໜ້າຈາກກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ; ນອກນັ້ນ, ຍັງມີຕາງໜ້າສະຖານເອກອັກຄະລັດຖະທູດ ແລະ ຜູ້ຕາງໜ້າຖາວອນ ຂອງ ສປປລາວ ປະຈຳປະເທດຕ່າງໆ ເຂົ້າຮ່ວມທາງອອນລາຍ.

ກອງປະຊຸມໄດ້ສຸມໃສ່ຄົ້ນຄວ້າ, ປຶກສາຫາລື, ພິຈາລະນາແລະຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດຊຸດທີ IX ປະຈຳປີ 2025 ແລະທິດທາງແຜນການປະຈຳປີ2026; ການເຄື່ອນໄຫວວຽກງານການຕ່າງປະເທດ ໄລຍະ5ປີ(2021-2025) ຂອງສະພາແຫ່ງຊາດຊຸດທີ IX ແລະ ຄາດຄະເນທິດທາງແຜນການ 5 ປີ (2026-2030); ຜົນສຳເລັດວຽກງານຕິດຕາມກວດກາໃນຂົງເຂດວຽກງານການຕ່າງປະເທດ ປະຈຳປີ 2025, ຜົນສຳເລັດຂອງການເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 46 ທີ່ປະເທດມາເລເຊຍ; ຮັບຟັງການລາຍງານການເຄື່ອນໄຫວວຽກງານການຕ່າງປະເທດຂອງລັດຖະບານປະຈຳປີ2025, ສະພາບການສ້າງ ແລະ ການປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ຂອງລັດຖະບານໃນໄລຍະຜ່ານມາ; ບັນຫາພົ້ນເດັ່ນຂອງວຽກງານຊາຍແດນ, ວຽກງານກົງສູນ, ວຽກງານສິດທິມະນຸດ; ສະພາບການຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ ໃນ ສປປລາວ ປະຈຳປີ 2025 ແລະ ແຜນການປະຈຳປີ 2026; ສະພາບການພົ້ນເດັ່ນຂອງການຮ່ວມມື ລາວ-ຫວຽດນາມ, ລາວ-ຈີນ ປະຈຳປີ 2025 ແລະ ແຜນການຮ່ວມມືປະຈຳປີ 2026.

ຜູ້ແທນກອງປະຊຸມ ໄດ້ຍົກສູງຄວາມຮັບຜິດຊອບດ້ານການເມືອງ, ສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດແລະປະສົບການຈາກການປະຕິບັດໜ້າທີ່ຕົວຈິງ ປະກອບຄຳຄິດຄຳເຫັນໃສ່ການເຄື່ອນໄຫວວຽກງານຂອງກຳມາທິການການຕ່າງປະເທດຢ່າງມີຈຸດສຸມ, ຮັບປະກັນຄວາມຖືກຕ້ອງຕາມແນວທາງຂອງພັກ, ສອດຄ່ອງກັບທິດທາງແຜນການລວມຂອງສະພາແຫ່ງຊາດ, ສ່ອງແສງໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ວິທີການແກ້ໄຂແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານການຕ່າງປະເທດຂອງ ສພຊ ມີຄຸນນະພາບ ແລະ ປະສິດທິຜົນສູງ ຮັບໃຊ້ໜ້າທີ່ການເມືອງຂອງພັກ, ລັດ ແລະ ຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ ເພື່ອຜັນຂະຫຍາຍວຽກງານຂອງກຳມາທິການການຕ່າງປະເທດໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດແລະສະພາບຄວາມເປັນຈິງແຫ່ງການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່.

ໂອກາດນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນງານ ແລະ ຜົນສຳເລັດການເຄື່ອນໄຫວວຽກງານຂອງກຳມາທິການການຕ່າງປະເທດທັງໃນຂອບສອງຝ່າຍແລະຫຼາຍຝ່າຍ ໂດຍສະເພາະຜົນສຳເລັດໃນການດຳເນີນກອງປະຊຸມໄອປາ ຄັ້ງທີ 45 ທີ່ສະພາແຫ່ງຊາດເຮົາເປັນເຈົ້າພາບ ແລະ ຜົນສຳເລັດການເຂົ້າຮ່ວມຂອງຄະນະຜູ້ແທນສະພາແຫ່ງຊາດລາວ ໃນກອງປະຊຸມໄອປາ ຄັ້ງທີ 46 ທີ່ປະເທດມາເລເຊຍເປັນເຈົ້າພາບ. ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ເອົາໃຈໃສ່ສຶກສາອົບຮົມແນວຄິດການເມືອງໃຫ້ພະນັກງານມີພູມຕ້ານທານ, ເພີ່ມທະວີຄວາມຮັບຜິດຊອບດ້ານການເມືອງ, ມີຄວາມໜັກແໜ້ນດ້ານຫຼັກໝັ້ນການເມືອງ, ມີຄວາມອຸ່ນອຽນທຸ່ນທ່ຽງ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມສາມັກຄີຢ່າງໜັກແໜ້ນ ແລະ ມີຄວາມເປັນເອກະພາບສູງຕໍ່ແນວທາງຂອງພັກ-ລັດ, ມີຄວາມບຸກບືນສູ້ຊົນປະຕິບັດໜ້າທີ່ການເມືອງ ຖືສຳຄັນການເຊື່ອມຊຶມ, ເຂົ້າໃຈ ແລະ ຮູ້ຜັນຂະຫຍາຍແນວທາງການຕ່າງປະເທດຂອງພັກ, ມູນເຊື້ອປະຫວັດສາດຂອງຊາດ, ລະບຽບກົດໝາຍຂອງລັດ ເພື່ອເປັນອາວຸດອັນແຫຼມຄົມ; ເອົາໃຈໃສ່ປະຕິບັດແບບແຜນວິທີເຮັດວຽກບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ມີການແບ່ງງານແບ່ງຄວາມຮັບຜິດຊອບ, ມີຄວາມຮັບຜິດຊອບສູງໃນການຮ່າງ ແລະ ຮຽບຮຽງເອກະສານຕ່າງໆ; ສ້າງນິຕິກຳ ແລະ ກົນໄກທີ່ເປັນບ່ອນອີງໃຫ້ແກ່ການຈັດຕັ້ງຜັນຂະຫຍາຍຜົນຂອງການເຄື່ອນໄຫວວຽກງານການຕ່າງປະເທດ; ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດວຽກງານການຕ່າງປະເທດຕາມພາລະບົດບາດຂອງສະພາແຫ່ງຊາດ; ຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງ, ສັນຍາ ແລະ ສົນທິສັນຍາ ລະຫວ່າງ ສປປລາວກັບຕ່າງປະເທດກ່ຽວກັບການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນຂອງຕ່າງປະເທດ ດ້ວຍການປະສານກັບພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ, ທ້ອງຖິ່ນ ເພື່ອຊອກຫາວິທີແກ້ໄຂບັນຫາທີ່ຫຍຸ້ງຍາກ, ອຸດຕັນ ໃນການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນຂອງຕ່າງປະເທດ ແລະ ຕິດຕາມກວດກາຄວາມຄືບໜ້າຂອງບັນດາໂຄງການລົງທຶນຂອງຕ່າງປະເທດ, ການຄ້າມະນຸດ, ການປັບປຸງດ່ານສາກົນກັບຕ່າງປະເທດ, ບັນດາໂຄງການຕະຝັ່ງເຈື່ອນ, ໂຄງການທີ່ມີຜົນກະທົບເຊັ່ນ: ບັນຫາຊາຍແດນ, ການຄຸ້ມຄອງດ່ານຊາຍແດນ, ການເຂົ້າ-ອອກເມືອງ, ແຮງງານຕ່າງດ້າວ, ສິດທິມະນຸດ, ສະພາບການແກ້ໄຂຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບກົດໝາຍຕາມບໍລິເວນຊາຍແດນ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ລັດຖະບານ; ສືບຕໍ່ປັບປຸງກົນໄກພົວພັນປະສານງານ ໃຫ້ວ່ອງໄວ, ໂລ່ງລຽນ, ຄ່ອງຕົວ, ທັນເວລາ ໂດຍສະເພາະກົນໄກການປະສານງານກັບຄະນະເລຂາທິການ, ບັນດາກຳມາທິການພາຍໃນສະພາແຫ່ງຊາດ, ຢູ່ສູນກາງ ແລະ ທ້ອງຖິ່ນ; ຖືສຳຄັນການສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນເປັນແຕ່ລະໄລຍະ; ຍົກສູງຄວາມຮັບຜິດຊອບ, ເຂົ້າຮ່ວມແຕ່ຫົວທີ ໃນການສ້າງ ແລະ ປັບປຸງກົດໝາຍ, ບັນດານິຕິກຳໃຕ້ກົດໝາຍ ແລະ ບັນດາແຜນຍຸດທະສາດຕ່າງໆ ໃນຂົງເຂດວຽກງານການຕ່າງປະເທດ; ເສີມຂະຫຍາຍການພົວພັນຮ່ວມມືກັບລັດຖະສະພາປະເທດເພື່ອນມິດຍຸດທະສາດ, ປະເທດເພື່ອນມິດໃນພາກພື້ນ ແລະ ສາກົນ; ເປັນເຈົ້າການໃນການຕ້ອນຮັບຄະນະຜູ້ແທນລັດຖະສະພາຕ່າງປະເທດທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ, ກະກຽມໃຫ້ແກ່ຄະນະຜູ້ແທນສະພາແຫ່ງຊາດລາວຂັ້ນຕ່າງໆ ເຂົ້າຮ່ວມກອງປະຊຸມສາກົນ ແລະ ກອງປະຊຸມອື່ນໆ ໃຫ້ປະສົບຜົນສຳເລັດ ບົນພື້ນຖານປະຢັດມັດທະຍັດ ແລະ ຕາມຄວາມສາມາດດ້ານງົບປະມານທີ່ລັດຖະບານສະໜອງໃຫ້; ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍບັນດາບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາຕ່າງປະເທດ, ສືບຕໍ່ຄົ້ນ

ອ່ານຕໍ່ໜ້າ 8

# ສຈ. ປອ. ຈະເລີນ ເຢຍປາວເຮີ ຕ້ອນຮັບທູດຮົງກາລີ ພ້ອມຄະນະນັກດົນຕີ



(ສພຊ) - ວັນທີ 5 ພະຈິກຜ່ານມາ, ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກິດຕິມະສັກສະມາຄົມສຽງແຄນລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ລາສຊະໂລ ດາກົກສ໌ (LászlóDÁKÓCS)ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງປະເທດຮົງກາລີປະຈຳ ສປປລາວ ພ້ອມດ້ວຍທ່ານ ເບລາ ອາໂກສໂຕນ (Béla Ágoston) ນັກດົນຕີ ແລະ ອາຈານສອນດົນຕີຊາວຮົງກາລີ ແລະ ຄະນະ ເນື່ອງໃນໂອກາດເດີນທາງມາຢ້ຽມຢາມແລະເຮັດວຽກຢູ່ສປປລາວ; ໂອກາດນີ້, ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ສະແດງຄວາມປິຕິຍິນດີ ແລະ ຕ້ອນຮັບຢ່າງອົບອຸ່ນຕໍ່ຄະນະ ທັງກ່າວວ່າ ການມາຢ້ຽມຢາມຄັ້ງນີ້ ແມ່ນມີຄວາມໝາຍສຳຄັນ, ໂດຍສະເພາະແມ່ນໃນທ່າມກາງບັນຍາກາດທີ່ທົ່ວປວງຊົນລາວທັງຊາດ ພວມສ້າງຜົນງານຂ່ຳນັບຮັບຕ້ອນວັນຊາດທີ 2 ທັນວາ ຄົບຮອບ 50 ປີ ແລະ ຢູ່ໃນໄລຍະງານບຸນນະມັດສະການພະທາດຫຼວງ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ຍົກໃຫ້ເຫັນເຖິງສາຍພົວພັນມິດຕະພາບ ແລະ ການຊ່ວຍເຫຼືອເຊິ່ງກັນແລະກັນລະຫວ່າງ ສປປລາວ ແລະ ຮົງກາລີ ທີ່ມີມາຢ່າງຍາວນານ ນັບຕັ້ງແຕ່ສະໄໝຕໍ່ສູ້ກູ້ຊາດ, ລັດຖະບານ ແລະ ປະຊາຊົນຮົງກາລີ ໄດ້ໃຫ້ການສະໜັບສະໜູນອັນລ້ຳຄ່າ ລວມທັງການກໍ່ສ້າງບຸກຄະລາກອນ; ພາຍຫຼັງການສະຖາປະນາ ສປປລາວ, ຮົງກາຣີ ກໍຍັງສືບຕໍ່ຊ່ວຍເຫຼືອດ້ານພື້ນຖານໂຄງລ່າງ ແລະ ໃຫ້ທຶນການສຶກສາແກ່ນັກສຶກສາລາວຢ່າງຕໍ່ເນື່ອງ. ພ້ອມນີ້, ທ່ານຍັງໄດ້ຕາງໜ້າສະພາແຫ່ງຊາດ ສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ການສະໜັບສະໜູນຊ່ວຍເຫຼືອຂອງລັດຖະບານແລະປະຊາຊົນຮົງກາລີ.

ສຳລັບການມາຢ້ຽມຢາມຂອງທ່ານ ເບລາ ອາໂກສໂຕນ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ຕີລາຄາສູງຕໍ່ການເຄື່ອນໄຫວດ້ານວັດທະນະທຳ, ໂດຍສະເພາະການແລກປ່ຽນບົດຮຽນກັບຄູ-ອາຈານຢູ່ວິທະຍາໄລສິລະປະແຫ່ງຊາດແລະການເຂົ້າຮ່ວມງານບຸນປະເພນີຕ່າງໆ; ທ່ານໄດ້ກ່າວເຖິງຄວາມສຳຄັນຂອງ "ແຄນລາວ" ເຊິ່ງເປັນມໍລະດົກໂລກ ແລະ ສະມາຄົມສຽງແຄນລາວ ທີ່ປີນີ້ຄົບຮອບ 20 ປີ, ຫວັງຢ່າງຍິ່ງວ່າ ການມາຢ້ຽມຢາມຄັ້ງນີ້ ຈະສ້າງເງື່ອນໄຂໃຫ້ແກ່ການຮ່ວມມືສອງຝ່າຍ ເພື່ອປັບປຸງຄວາມອາດສາມາດຂອງສະມາຄົມສຽງແຄນລາວ ແລະ ຫວັງວ່າທ່ານເອກອັກຄະລັດຖະທູດ ຈະສືບຕໍ່ເປັນຂົວຕໍ່ສ້າງເງື່ອນໄຂໃຫ້ການຮ່ວມມືລະຫວ່າງນັກດົນຕີສອງປະເທດ ໃຫ້ແໜ້ນແຟ້ນຍິ່ງໆຂຶ້ນ.

ທ່ານ ລາສຊະໂລ ດາກົກສ໌ ເອກອັກຄະລັດຖະທູດຮົງກາລີ ກໍໄດ້ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການຕ້ອນຮັບອັນອົບອຸ່ນຈາກທ່ານຮອງປະທານສະພາແຫ່ງຊາດ ທັງຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນດີງາມລະຫວ່າງສອງປະເທດ ແລະ ຢືນຢັນທີ່ຈະສືບຕໍ່ເສີມຂະຫຍາຍການຮ່ວມມືໃນຫຼາຍດ້ານ, ໂດຍສະເພາະແມ່ນການຮ່ວມມືດ້ານການສຶກສາ ແລະ ວັດທະນະທຳ; ທ່ານທູດຍັງໄດ້ກ່າວເນັ້ນວ່າ ການເດີນທາງມາຂອງນັກດົນຕີຮົງກາລີຄັ້ງນີ້ເປັນບາດກ້າວສຳຄັນໃນການແລກປ່ຽນດ້ານສິລະປະ ແລະ ຢືນຢັນວ່າ ຈະພະຍາຍາມຊຸກຍູ້ສົ່ງເສີມການຮ່ວມມືລະຫວ່າງສະຖາບັນດົນຕີ ກໍຄືສະມາຄົມສຽງແຄນລາວ ໃຫ້ນັບມື້ນັບແໜ້ນແຟ້ນ ແລະ ເກີດດອກອອກຜົນຍິ່ງຂຶ້ນ.

# ສຳມະນາການຈັດຕັ້ງປະຕິບັດ ແຜນການພັດທະນາເສດຖະກິດ-ສັງຄົມ



(ສພຊ) - ກອງປະຊຸມສຳມະນາກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ຮ່າງທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໄດ້ຈັດຂຶ້ນໃນວັນທີ 4-5 ພະຈິກນີ້ ທີ່ຫໍປະຊຸມແຫ່ງຊາດ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານກຳມະການຄະນະປະຈຳ ແລະ ຮອງປະທານກຳມາທິການສະພາແຫ່ງຊາດ, ທ່ານລັດຖະມົນຕີ-ຮອງລັດຖະມົນຕີ ແລະ ຮອງຜູ້ວ່າການທະນາຄານແຫ່ງ ສປປລາວ, ສະມາຊິກສະພາແຫ່ງຊາດຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ບັນດາທ່ານຈາກສະພາທິດສະດີສູນກາງ, ຕາງໜ້າຄູ່ຮ່ວມພັດທະນາ, ນັກຄົ້ນຄວ້າຈາກສະຖາບັນຄົ້ນຄວ້າ ແລະ ມະຫາວິທະຍາໄລແຫ່ງຊາດ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ທ່ານ ສົມມາດ ພົລເສນາ ກ່າວວ່າ: ກອງປະຊຸມຄັ້ງນີ້ ມີຈຸດປະສົງເພື່ອກະກຽມຄວາມພ້ອມທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະ ວິທີການແກ້ໄຂໃນຕໍ່ໜ້າ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2025 ແລະ ການກະກຽມຮ່າງທິດທາງແຜນການ 5 ປີ ຄັ້ງທີ X (2026-2030); ເປັນການຍົກສູງທາງດ້ານເນື້ອໃນໃຫ້ແກ່ສະມາຊິກສະພາແຫ່ງຊາດ ໄດ້ຮັບຮູ້ ແລະ ເຂົ້າໃຈ ການຄົ້ນຄວ້າການຕີລາຄາໃຫ້ຖືກຈຸດສຸມ ເພື່ອຮັບປະກັນໃຫ້ແຜນວຽກທີ່ລັດຖະບານຈະນຳມາພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 10 ມີປະສິດທິຜົນ ສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມ ກໍຄືແຕ່ລະທ້ອງຖິ່ນ ນຳໄປຈັດຕັ້ງປະຕິບັດໄດ້; ເພື່ອຕິດຕາມກວດກາ, ປະເມີນຜົນ, ສະຫຼຸບຕີລາຄາຜົນສຳເລັດ, ບັນຫາຄົງຄ້າງ ແລະ ສິ່ງທ້າທາຍ ກ່ຽວກັບມະຕິກອງປະຊຸມສະພາແຫ່ງຊາດຄັ້ງປະຖົມມະລຶກ ແລະ ມະຕິປະຈຳປີ ທີ່ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 5 ປີ ຄັ້ງທີ IX (2025 -2021) ຕິດພັນກັບວາລະແຫ່ງຊາດ; ເພື່ອຍາດແຍ່ງເອົາບົດຮຽນ ແລະ ປະສົບການຈາກພາຍໃນ ແລະ ຕ່າງປະເທດ ໃນການກະກຽມເນື້ອຮັບໃຊ້ກອງປະຊຸມສະພາແຫ່ງຊາດ.

ກອງປະຊຸມໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030); ການປະກອບຄຳຄິດຄຳເຫັນຈາກກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ສະພາທິດສະດີສູນກາງພັກ, ອະດີດການນຳ ແລະ ນັກຄົ້ນຄວ້າ. ພ້ອມນັ້ນ, ຍັງໄດ້ຮັບຟັງການປະກອບຄຳເຫັນຈາກຄູ່ຮ່ວມພັດທະນາ ໃນການປະກອບສ່ວນຊ່ວຍເຫຼືອຂອງອົງການສະຫະປະຊາຊາດໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີໃຫ້ສອດຄ່ອງກັບຂະບວນການດ້ານງົບປະມານ ລວມທັງຂະບວນການປະຕິຮູບການວາງງົບປະມານທີ່ພວມດຳເນີນການ, ບັນຫານະໂຍບາຍ ແລະ ກາລະໂອກາດໃນການສ້າງຄວາມມີສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ແລະ ການເຕີບໂຕສີຂຽວແບບຍືນຍົງ; ຂອບການຕິດຕາມກວດກາ ແລະ ປະເມີນສຳລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X; ການປັບປຸງຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງ ແລະ ເສັ້ນທາງໄປສູ່ການເຄື່ອນຍ້າຍຖິ່ນຖານ; ການແກ້ໄຂການໃຊ້ຈ່າຍງົບປະມານຂອງລັດຖະບານທີ່ຈຳກັດໃນຂະແໜງການສາທາລະນະສຸກ ແລະ ການສຶກສາ ໃນສະພາບການຖອນທຶນຈາກຜູ້ໃຫ້ທຶນ; ການວາງນະໂຍບາຍການພັດທະນາສັງຄົມແບບມີສ່ວນຮ່ວມຈາກທຸກພາກສ່ວນ ແລະ ການຫຼຸດຜ່ອນຄວາມບໍ່ເທົ່າທຽມກັນໃນສັງຄົມ; ການສ້າງສົມດຸນລະຫວ່າງການເຕີບໂຕທາງດ້ານເສດຖະກິດ ແລະ ການປົກປ້ອງສິ່ງແວດລ້ອມ; ການວາງນະໂຍບາຍການຍົກລະດັບຄວາມອາດສາມາດໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ; ການວາງນະໂຍບາຍການເຊື່ອມໂຍງກັບພາກພື້ນ ແລະ ການອຳນວຍຄວາມສະດວກໃຫ້ແກ່ການຄ້າ; ການລະດົມທຶນຊັບພະຍາກອນສຳລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X; ການຫັນເປັນດິຈິຕອນ ແລະ ນະວັດຕະກຳໃໝ່ເພື່ອການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ການນຳໃຊ້ປັນຍາປະດິດ (AI) ເພື່ອການສຶກສາ ແລະ ການພັດທະນາເສດຖະກິດ.

ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນທີ່ມີລັກສະນະວິທະຍາສາດ, ສ້າງສັນ, ມີຂໍ້ມູນຕົວຈິງ ແລະ ຂໍ້ສະເໜີແນະທີ່ສົມເຫດສົມຜົນຕໍ່ບັນດາບົດທີ່ໄດ້ສະເໜີຕໍ່ກອງປະຊຸມ.

**(ນາງ ກຸກກິກ ບຸດດາໄຊ)**

# ສນຊ ເຜີຍແຜ່ມະຕິກຳອຽກງານເລືອກຕັ້ງ



(ສພຊ) - ທ້າຍອາທິດຜ່ານມາ ທີ່ສູນກາງແນວລາວສ້າງຊາດ (ສນຊ) ໄດ້ພ້ອມກັນເຊື່ອມຊຶມມະຕິ 26/ກມສພ ຂອງກົມການເມືອງສູນກາງພັກ ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ເຊິ່ງເຜີຍແຜ່ໂດຍທ່ານ ດຣ. ນາງ ອິນລາວັນ ແກ້ວບຸນພັນ ກຳມະການສູນກາງພັກ, ຮອງປະທານຜູ້ປະຈຳການສູນກາງແນວລາວສ້າງຊາດ, ມີບັນດາທ່ານຮອງປະທານ ແລະ ກຳມະການສນຊ, ຕາງໜ້າຈາກສະມາຄົມແລະສາສະໜາຕ່າງໆ ພ້ອມດ້ວຍສະມາຊິກພັກ, ພະນັກງານ-ລັດຖະກອນຂອງສນຊ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ດຣ. ນາງ ອິນລາວັນແກ້ວບຸນພັນ ໄດ້ຍົກໃຫ້ເຫັນບັນດາເນື້ອໃນທີ່ສຳຄັນ ແລະ ຄວາມຈຳເປັນໃນການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ, ຈຸດປະສົງ, ລະດັບຄາດໝາຍ, ວຽກງານຈຸດສຸມ ແລະ ວິທີການຈັດຕັ້ງປະຕິບັດທີ່ມະຕິດັ່ງກ່າວໄດ້ກຳນົດໄວ້ ທັງເນັ້ນວ່າ: ໃຫ້ຖືເອົາການເລືອກຕັ້ງສະມາຊິກສະພາແຕ່ລະຂັ້ນ ເປັນການບູລະນະອົງການຈັດຕັ້ງໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ເສີມຂະຫຍາຍສິດເປັນເຈົ້າທາງດ້ານການເມືອງຂອງປະຊາຊົນລາວບັນດາເຜົ່າ ເຂົ້າໃນການເລືອກຕັ້ງຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງຕົນ, ຖືເອົາການເລືອກຕັ້ງເປັນໜ້າທີ່ການເມືອງ, ເປັນພັນທະ ແລະ ຄວາມຮັບຜິດຊອບໂດຍກົງຂອງທຸກກະຊວງ-ອົງການ ແລະ ພະນັກງານ-ລັດຖະກອນທຸກຄົນ, ເປັນບັ້ນຊຸກຍູ້ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ຍູ້ແຮງການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ແລະ ໃຫ້ຖືເອົາການເລືອກຕັ້ງໃນຄັ້ງນີ້ເປັນບັ້ນເປີດສາກໃຫ້ແກ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງແນວລາວສ້າງຊາດ.

ໂອກາດນີ້ຍັງໄດ້ຮັບຊົມສາລະຄະດີ 45 ປີ ແຫ່ງການກຳເນີດ, ເຕີບໃຫຍ່ຂະຫຍາຍຕົວ, ຜົນງານ ແລະ ມູນເຊື້ອ ຂອງສະພາແຫ່ງຊາດໃນແຕ່ລະໄລຍະ.



# ກິດຈະກຳບານເຕະມິດຕະພາບ ຊາວໜຸ່ມສະພາແຫ່ງຊາດ ກັບ ຊາວໜຸ່ມສູນກາງ ຊປປລາວ



(ສພຊ)-ກິດຈະກຳແຂ່ງຂັນກິລາບານເຕະມິດຕະພາບລະຫວ່າງທີມກິລາບານເຕະຊາວໜຸ່ມສະພາແຫ່ງຊາດ (ສພຊ) ກັບ ທີມກິລາບານເຕະຊາວໜຸ່ມສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ຊປປລາວ) ໄດ້ຈັດຂຶ້ນໃນຕອນແລງວັນທີ 6 ພະຈິກຜ່ານມາ ທີ່ເດີ່ນກິລາບານເຕະລ້ານຊ້າງ (ບ້ານໜອງໄຮ) ນະຄອນຫຼວງວຽງຈັນ ໂດຍມີຄະນະບໍລິຫານງານຊາວໜຸ່ມ, ພະນັກງານ-ລັດຖະກອນ ແລະ ນັກກິລາຂອງທັງສອງພາກສ່ວນ ນຳໂດຍທ່ານ ທອງລີ ສີສຸລິດ ເລຂາຄະນະບໍລິຫານງານສູນກາງຊປປລາວ ແລະ ທ່ານ ສົມບູນ ໂຄດໄຊ ເລຂາຄະນະບໍລິຫານງານຊາວໜຸ່ມ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ; ທັງນີ້, ກໍເພື່ອສ້າງຂະບວນການຊົມເຊີຍຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ ຄັ້ງທີ IX ທັງເປັນການສ້າງຂະບວນການຮັບຕ້ອນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX, ການສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 50 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ ໃຫ້ເປັນຂະບວນການຟົດຟື້ນ, ທັງເປັນການເສີມຂະຫຍາຍ ແລະ ຮັດແໜ້ນຄວາມສາມັກຄີຮັກແພງລະຫວ່າງຊາວໜຸ່ມສອງພາກສ່ວນ ໃຫ້ແໜ້ນແຟ້ນຍິ່ງໆຂຶ້ນ.

# ສະພາແຫ່ງຊາດ ຈະຮັບຮອງເອົາ 8 ມະຕິ



(ສພຊ) - ວັນທີ 4 ພະຈິກຜ່ານມາ, ທ່ານ ນາງ ອຳໄພ ວອນລ້ອມບຸນແພງກຳມະການສຳຮອງສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄຂຂຶ້ນໃນວັນທີ 10-21 ພະຈິກ 2025 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ ໃຊ້ເວລາດຳເນີນກອງປະຊຸມທັງໝົດ 10 ວັນ (ບໍ່ລວມວັນພັກທາງລັດຖະການ) ເຊິ່ງຈະໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍອອກມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 8 ສະບັບ ໃນນັ້ນ:

ມະຕິຮັບຮອງເອົາວຽກງານລັດຖະບານ 3 ສະບັບ ຄື:

1) ມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ປະຈຳປີ2025; ແຜນງົບປະມານແຫ່ງລັດ 5 ປີ (2021-2025), ປະຈຳປີ2025, ແຜນເງິນຕາ ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026, ບົດລາຍງານການດັດແກ້ງົບປະມານແຫ່ງລັດ ລາຍຮັບ-ລາຍຈ່າຍວິຊາການຂອງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ປີ 2025 ແລະ ເງິນເກີນແຜນປີ 2024.

2) ມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ.

3) ມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ.

ມະຕິຮັບຮອງເອົາວຽກງານອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ 2 ສະບັບ ຄື:

1) ມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ2025 ແລະ ທິດທາງແຜນການປະຈຳປີ 2026, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ.

2) ມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ2025 ແລະ ທິດທາງແຜນການປະຈຳປີ 2026, ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2023 ຂອງອົງການກວດກາແຫ່ງລັດ.

ມະຕິຮັບຮອງເອົາວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ 2 ສະບັບ ຄື:

1) ມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026 ຂອງສານປະຊາຊົນສູງສຸດ.

2) ມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ2026 ຂອງອົງການໄອຍະການປະຊາຊົນສູງສຸດ.

ມະຕິຮັບຮອງເອົາວຽກງານ ສພຊ 1 ສະບັບ ຄື: ຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025ຂອງສະພາແຫ່ງຊາດຊຸດທີ IX ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X.

ພ້ອມນັ້ນ, ທ່ານຍັງແຈ້ງໃຫ້ຊາບວ່າ ໃນໄລຍະກະກຽມ ແລະ ດຳເນີນກອງປະຊຸມ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນແລະຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມສະພາແຫ່ງຊາດ ເຊິ່ງບັນດາທ່ານສາມາດສົ່ງຕາມວິທີລຸ່ມນີ້:

• ສາຍດ່ວນ: 156 ແຕ່ວັນທີ 3-21 ພະຈິກ 2025 ໃນໂມງລັດຖະການ.

• ອີເມວ: nalao.156@gmail.com

• App: Lao Na

# ອົດສະຕຣະລີ ສະໜັບສະໜູນການວາງນະໂຍບາຍ ໂດຍອີງໃສ່ຫຼັກຖານ ແລະ ການຕິດຕາມກວດກາ ການຈັດຕັ້ງປະຕິບັດນິຕິກຳ



(ສພຊ) - ວັນທີ 7 ພະຈິກ 2025 ລັດຖະບານອົດສະຕຣາລີ ແລະ ມູນນິທິເອເຊຍ (TAF) ໄດ້ຢືນຢັນອີກຄັ້ງກ່ຽວກັບການຮ່ວມມືກັບສະພາແຫ່ງຊາດ (ສພຊ) ຂອງ ສປປລາວ ໂດຍຜ່ານການເຊັນບົດບັນທຶກຄວາມເຂົ້າໃຈສະບັບໃໝ່ ໃນໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງໃນການວາງນະໂຍບາຍໂດຍອີງໃສ່ຫຼັກຖານ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳ; ພິທີເຊັນບົດບັນທຶກຄວາມເຂົ້າໃຈ ໄດ້ຈັດຂຶ້ນທີ່ ສພຊ ໂດຍການເຂົ້າຮ່ວມຂອງທ່ານ ນາງ ດາວເພັດ ສີຫາວົງ ຫົວໜ້າກົມການເງິນ, ຮອງຫົວໜ້າກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າ, ຄະນະເລຂາທິການສະພາແຫ່ງຊາດພ້ອມດ້ວຍຄະນະກົມຈາກກຳມາທິການກົດໝາຍ, ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ກຳມາທິການແຜນການ, ການເງິນ ແລະ ການກວດສອບ, ຄະນະສູນຈາກສະຖາບັນຄົ້ນຄວ້ານິຕິກຳ ແລະ ກະຊວງການຕ່າງປະເທດ.

ທ່ານນາງເບນິຕາຊອມເມີວິວລ໌(Benita Sommerville) ຮອງເອກອັກຄະລັດຊະທູດອົດສະຕຣາລີ ປະຈຳ ສປປລາວ ໄດ້ເນັ້ນໜັກເຖິງຄວາມມຸ່ງໝັ້ນຂອງອົດສະຕຣາລີ ໃນການສະໜັບສະໜູນ ສປປລາວ ໃນການສົ່ງເສີມການປົກຄອງທີ່ດີແລະເສີມຂະຫຍາຍຄວາມອາດສາມາດຂອງສະຖາບັນ. “ອົດສະຕຣາລີມີຄວາມພູມໃຈທີ່ໄດ້ຮ່ວມມືກັບສະພາແຫ່ງຊາດ ເພື່ອເສີມສ້າງການວາງນະໂຍບາຍທີ່ອີງໃສ່ຫຼັກຖານ ແລະ ການຕິດຕາມກວດກາດ້ານນິຕິບັນຍັດ ໃນຂະນະທີ່ ສປປລາວ ກຳລັງກະກຽມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດສະບັບຕໍ່ໄປ.”

ໂຄງການນີ້ ໄດ້ຮັບທຶນຈາກລັດຖະບານອົດສະຕຣາລີ ແລະ ຈັດຕັ້ງປະຕິບັດໂດຍມູນນິທິເອເຊຍ ເຊິ່ງມີຈຸດປະສົງເພື່ອເສີມສ້າງຄວາມສາມາດດ້ານນິຕິບັນຍັດ ແລະ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍສ້າງຂຶ້ນບົນພື້ນຖານການຮ່ວມມືຫຼາຍກວ່າ 13 ປີ ລະຫວ່າງສະພາແຫ່ງຊາດແລະມູນນິທິເອເຊຍ, ໂດຍສຸມໃສ່ການເສີມຂະຫຍາຍການນຳໃຊ້ການຄົ້ນຄວ້າ ແລະ ຂໍ້ມູນໃນການວາງນະໂຍບາຍ, ປັບປຸງຂະບວນການທົບທວນນິຕິບັນຍັດ ແລະ ສົ່ງເສີມການສ້າງກົດໝາຍທີ່ມີປະສິດທິພາບເພື່ອສະໜັບສະໜູນເປົ້າໝາຍທີ່ເປັນບຸລິມະສິດຂອງການພັດທະນາປະເທດ.

ການຮ່ວມມືໄລຍະໃໝ່ນີ້ເນັ້ນໃຫ້ເຫັນເຖິງການສະໜັບສະໜູນຢ່າງຕໍ່ເນື່ອງຂອງລັດຖະບານອົດສະຕຣາລີ ຕໍ່ ສປປລາວ ໃນການເສີມສ້າງສະຖາບັນນິຕິບັນຍັດ ແລະ ສົ່ງເສີມການປົກຄອງທີ່ມີຄວາມຮັບຜິດຊອບແລະການມີສ່ວນຮ່ວມເພື່ອການພັດທະນາປະເທດຊາດແບບຍືນຍົງ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ, ບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແລະ ບັນດາທ່ານສະມາຊິກລັດຖະບານ, ສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ບັນດາທ່ານທູຕານຸທູດ, ຕາງໜ້າອົງການຈັດຕັ້ງສາກົນປະຈຳ ສປປລາວ ແລະ ແຂກຖືກເຊີນ.

ພາຍຫຼັງທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສູນທອນພິດເປີດກອງປະຊຸມຢ່າງເປັນທາງການ. ກອງປະຊຸມໄດ້ຮັບຟັງບົດລາຍງານຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ປະຈຳປີ 2025, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນເງິນຕາ ປະຈຳປີ 2025; ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ປະຈຳປີ 2026, ຮ່າງແຜນງົບປະມານແຫ່ງລັດ 5 ປີ (2026-2030), ປະຈຳປີ 2026 ແລະ ຮ່າງແຜນເງິນຕາປະຈຳປີ2026; ການດັດແກ້ງົບປະມານແຫ່ງລັດ ລາຍຮັບ-ລາຍຈ່າຍວິຊາການຂອງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ປີ 2025 ແລະ ເງິນເກີນແຜນປີ 2024; ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ກໍໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງທ່ານນາຍົກລັດຖະມົນຕີ. ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ທັງໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນ; ບັນດາທ່ານສສຊ ກໍໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ ຈົນຮອດພາກບ່າຍຂອງວັນທີ 11 ພະຈິກ ຕາມວາລະຂອງກອງປະຊຸມ.

ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ຈະດຳເນີນໄປຈົນຮອດວັນທີ 21 ພະຈິກ 2025, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນທີ່ຈະສົ່ງໄປຍັງກອງປະຊຸມ ເຊິ່ງສາມາດສົ່ງຕາມວິທີລຸ່ມນີ້:

- ສາຍດ່ວນໝາຍເລກ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- ແອັບພລິເຄຊັນ: Lao Na

**(ນາງ ສຸພາວັນ ທອມສະນິດ)**

## ເຫັນດີ...

(ຕໍ່ຈາກໜ້າ 1)

ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ມີບາງທັດສະນະ ແລະ ຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 5 ປີ ຄັ້ງທີ IX (2021-2025), ແຜນການປີ 2025 ແລະ ທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ແຜນການປີ 2026 ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂໃນຕໍ່ໜ້າດັ່ງນີ້:

1.ການເຕີບໂຕເສດຖະກິດ: ເຖິງວ່າລວມຍອດຜະລິດຕະພັນພາຍໃນໄດ້ຕາມແຜນການ, ແຕ່ລາຍໄດ້ສະເລ່ຍຕໍ່ຫົວຄົນ ໄລຍະ 5 ປີ ໄດ້ພຽງ 2,085 ໂດລາ (ມະຕິ ສພຊ 2,880 ໂດລາ/ຄົນ/ປີ) ເນື່ອງຈາກການອ່ອນຄ່າຂອງເງິນກີບ; ການຫັນປ່ຽນໂຄງປະກອບເສດຖະກິດ ຍັງບໍ່ໄດ້ຕາມແຜນ ເປັນຕົ້ນ ຂະແໜງບໍລິການ ເຕີບໂຕພຽງ 4.52% (ມະຕິ ສພຊ 6%), ກວມ 36.10% ຂອງ GDP (ມະຕິ ສພຊ 40.7%); ການຜະລິດໃນຂະແໜງກະສິກຳ ແລະ ອຸດສາຫະກຳ ຂະບວນການປຸງແຕ່ງໜ້ອຍ ເຮັດໃຫ້ອັດຕາສ່ວນມູນຄ່າເພີ່ມຈາກການຜະລິດຍັງຕ່ຳ, ປະສິດທິພາບ, ປະສິດທິຜົນແລະຄຸນນະພາບຍັງບໍ່ທັນສູງ, ບໍ່ທັນຮັບປະກັນການພັດທະນາໄປຕາມທິດສີຂຽວ ແລະ ຍືນຍົງ.

2.ການປະຕິບັດແຜນງົບປະມານ: ເຖິງວ່າການປະຕິບັດແຜນລາຍຮັບໄດ້ຕາມແຜນ ແລະ ເກີນແຜນ, ແຕ່ການກຳນົດແຜນດັ່ງກ່າວຍັງບໍ່ທັນສອດຄ່ອງກັບທ່າແຮງບົ່ມຊ້ອນ ແລະ ຖານລາຍຮັບຕົວຈິງ (ແຜນຕ່ຳກວ່າຄວາມສາມາດເກັບຕົວຈິງ);ການຈັດຕັ້ງປະຕິບັດແຜນລາຍຈ່າຍໄດ້ຕາມແຜນ, ແຕ່ວ່າຍັງບໍ່ທັນສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນ ແຜນລາຍຈ່າຍລົງທຶນຂອງລັດບໍ່ທັນພຽງພໍ ຈຶ່ງເຮັດໃຫ້ຍັງມີໜີ້ສິນການລົງທຶນຂອງລັດຄ້າງຊຳລະເປັນຈຳນວນບໍ່ໜ້ອຍ, ພ້ອມກັນນີ້ ການປະຕິບັດແຜນລາຍຈ່າຍງົບປະມານແຫ່ງລັດ ຍັງບໍ່ມີປະສິດທິພາບ, ປະສິດທິຜົນ ແລະຄຸນນະພາບສູງເທົ່າທີ່ຄວນ; ອັດຕາຂາດດຸນງົບປະມານທຽບ GDP ຕ່ຳ, ແຕ່ອັດຕາຂາດດຸນຊຳລະຕົ້ນທຶນ ແລະ ດອກເບ້ຍກັບຕ່າງປະເທດຍັງສູງ, ການສະໜອງການຈັດສັນງົບປະມານເພື່ອການລົງທຶນ ແລະ ການພັດທະນາ ຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງແຜນການລົງທຶນຂອງລັດ;ການນຳໃຊ້ເງິນເກີນແຜນ ຍັງບໍ່ທັນປະຕິບັດຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ.

3. ການປະຕິບັດແຜນເງິນຕາ: ການປະຕິບັດມາດຕະການແກ້ໄຂເງິນເຟີ້ບໍ່ທັນມີການປະສານສົມທົບຢ່າງເປັນລະບົບກັບຂະແໜງການກ່ຽວຂ້ອງເທົ່າທີ່ຄວນ ໂດຍສະເພາະກັບຂະແໜງການຜະລິດ, ຂະແໜງການຄ້າ ແລະ ມາດຕະການດ້ານຈິດຕະສາດສັງຄົມ; ການຄຸ້ມຄອງເງິນຕາ ຍັງບໍ່ທັນປະຕິບັດຕາມກົດໝາຍຢ່າງເຂັ້ມງວດເປັນຕົ້ນການນຳໃຊ້ເງິນກີບ, ການນຳເຂົ້າເງິນຕາຕ່າງປະເທດ ຈາກການນຳເຂົ້າ-ສົ່ງອອກ ແລະ ການລົງທຶນ; ອັດຕາສ່ວນການປ່ອຍສິນເຊື່ອ ສົມທຽບກັບ GDP ເຫັນວ່າຍັງຕ່ຳ ເມື່ອທຽບກັບອັດຕາສ່ວນເງິນຝາກທຽບໃສ່GDP.

4. ການປະຕິບັດແຜນພັດທະນາວັດທະນະທຳ-ສັງຄົມ: ການປະຕິບັດບາງຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ບໍ່ສາມາດບັນລຸຕາມແຜນການ ເປັນຕົ້ນອັດຕາການເຂົ້າຮຽນ, ຈົບຊັ້ນປະຖົມ ແລະ ການປະລະການຮຽນ;ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກ ແລະ ລວງສູງບໍ່ໄດ້ມາດຕະຖານ; ການຕອບສະໜອງງົບປະມານໃຫ້ແກ່ກອງທຶນປະກັນສຸຂະພາບ ຍັງບໍ່ພຽງພໍ; ການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີຕໍ່ພາລະກິດປະຕິວັດຊາດປະຊາທິປະໄຕ, ການປົກປັກຮັກສາສິ່ງແວດລ້ອມເພື່ອສົ່ງເສີມການທ່ອງທ່ຽວ, ການແກ້ໄຂປາກົດການຫຍໍ້ທໍ້ດ້ານສັງຄົມຍັງເຮັດບໍ່ທັນໄດ້ດີ.

5. ການປະຕິບັດແຜນພັດທະນາຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ: ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ຍັງບໍ່ທັນມີປະສິດທິພາບ ແລະ ປະສິດທິຜົນເທົ່າທີ່ຄວນ ແລະ ສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ເຖິງວ່າລັດຖະບານຍັງມີຄວາມພະຍາຍາມແກ້ໄຂ ແຕ່ກໍຍັງມີຫຼາຍບັນຫາທີ່ຍັງຄົງຄ້າງ; ການປະຕິບັດຄາດໝາຍອອກໃບຕາດິນຍັງມີຄວາມຄືບໜ້າໜ້ອຍ ສົມທຽບໃສ່ມະຕິ ສພຊ; ການລົງທຶນຂອງລັດເພື່ອປ້ອງກັນຜົນກະທົບຈາກທຳມະຊາດຍັງຈຳກັດເປັນຕົ້ນການລົງທຶນປົກປັກຮັກສາເຂດນ້ຳດິນແດນຂອງປະເທດຊາດ ທີ່ຖືກນ້ຳເຊາະເຈື່ອນຊາຍແດນທຳມະຊາດຢູ່ຫຼາຍແຂວງ ຍັງບໍ່ພຽງພໍ, ຊັກຊ້າ ແລະ ຮັບປະກັນຄຸນນະພາບໄດ້.

6. ການປະຕິບັດຄາດໝາຍບໍລິຫານລັດ: ການປະຕິບັດຄຳຕັດສິນຂອງສານ ທຽບກັບມະຕິກອງປະຊຸມສະພາແຫ່ງຊາດແຜນ5ປີ(2021-2025) ໄດ້ກຳນົດໃຫ້ໄດ້80%ຂອງຈຳນວນຄະດີທີ່ຕັດສິນໃຊ້ໄດ້ຢ່າງເດັດຂາດ ແຕ່ການ ຈັດຕັ້ງປະຕິບັດໄດ້ພຽງປະມານ 14%.

ຕໍ່ທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ2026ຄວນກຳນົດບາງເປົ້າໝາຍໃຫຍ່ເຂົ້າໃນແຜນການເປັນຕົ້ນ:ຄາດໝາຍເສດຖະກິດມະຫາພາກ, ການເຕີບໂຕເສດຖະກິດ (GDP) ໃຫ້ຂະຫຍາຍຕົວ 5.5% ຂຶ້ນໄປ, ລາຍຮັບ GDP ສະເລ່ຍຕໍ່ຫົວຄົນ 2,238 ໂດລາ ແລະ ລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ ປະມານ 2,100 ໂດລາ, ຫັນປ່ຽນໂຄງປະກອບເສດຖະກິດໄປສູ່ຂະແໜງການທີ່ມີທ່າແຮງເປັນຕົ້ນຂະແໜງບໍລິການ, ກະສິກຳ ແລະ ອຸດສາຫະກຳປຸງແຕ່ງ, ກຳນົດໂຄງການບຸລິມະສິດຂອງການພັດທະນາທີ່ມີທ່າແຮງ, ເໝາະສົມກັບສະພາບຕົວຈິງຂອງປະເທດເຮົາເພື່ອຂັບເຄື່ອນການເຕີບໂຕເສດຖະກິດ; ສ້າງແຜນງົບປະມານທີ່ມີຕົວຊີ້ບອກລັກສະນະບຸກທະລຸ ຮັບ ປະກັນການສ້າງຄວາມເຂັ້ມແຂງໃຫ້ງົບປະມານແຫ່ງລັດເປັນຕົ້ນ:ເກັບລາຍຮັບຕາມທ່າແຮງບົ່ມຊ້ອນຕົວຈິງທີ່ມີ ແລະ ຖານລາຍຮັບໃໝ່ໃຫ້ຄົບຖ້ວນໃຫ້ບັນລຸໄດ້83,600 ຕື້ກີບ ຫຼື ເທົ່າກັບ 20.13% ຂອງ GDP, ປະຕິບັດລາຍຈ່າຍປະມານ 81,400 ຕື້ກີບ ຫຼືເທົ່າກັບ 19.60% ຂອງ GDP ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງແຜນການລົງທຶນຂອງລັດແລະຮັບປະກັນການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ, ຮັບປະກັນແຫຼ່ງດຸ່ນດ່ຽງງົບປະມານທີ່ມີຄວາມໝັ້ນຄົງ ແລະ ຍືນຍົງ ໃຫ້ມີລາຍຮັບເກີນດຸນ 2,200 ຕື້ກີບ ເທົ່າກັບ 0.53% GDP; ແຜນເງິນຕາ ຮັບປະກັນສະຖຽນລະພາບທາງດ້ານເສດຖະກິດມະຫາພາກ, ເຮັດໃຫ້ອັດຕາເງິນເຟີ້ສະເລ່ຍຢູ່ໃນລະດັບ 5% (ເໜັງຕີງ ± 2%), ຄັງສຳຮອງເງິນຕາຕ່າງປະເທດ ກຸ້ມການນຳເຂົ້າໄດ້ຢ່າງໜ້ອຍ 5 ເດືອນຂຶ້ນໄປ, ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຢູ່ໃນລະດັບບໍ່ເກີນ 3%; ແຜນການຄ້າພາຍໃນ ແລະ ຕ່າງປະເທດ ໃຫ້ຕິດພັນກັບແຜນການສົ່ງເສີມການຜະລິດ ແລະ ການລົງທຶນພາຍໃນ, ສູ້ຊົນມູນຄ່າການຄ້າຕ່າງປະເທດ ໃຫ້ໄດ້ 22,887 ລ້ານໂດລາ, ໃຫ້ການຄ້າເກີນດຸນ2,621 ລ້ານໂດລາ; ແຜນການລົງທຶນເພື່ອການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການສົ່ງເສີມການເຂົ້າຮ່ວມຂອງທຸກພາກສ່ວນເສດຖະກິດ, ມີການປະສານສົມທົບແລະກົມກຽວກັນຢ່າງເປັນລະບົບ ເປັນຕົ້ນການລົງທຶນລັດ, ການສົ່ງເສີມການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ, ການລົງທຶນຈາກສັງຄົມ ໃຫ້ບັນລຸຄວາມຕ້ອງການທຶນລວມທັງໝົດ 92,250 ຕື້ກີບ ເທົ່າກັບ 22% ຂອງ GDP; ແຜນພັດທະນາຂະແໜງການວັດທະນະທຳ-ສັງຄົມ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແລະ ການບໍລິຫານລັດ ໃຫ້ເປັນແຜນການທີ່ມີສ່ວນຮ່ວມ,ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ ແລະ ປະເທດຊາດ ໃຫ້ໄດ້ຫຼາຍຂຶ້ນ ແລະ ກຳນົດມາດຕະການຈັດຕັ້ງປະຕິບັດທີ່ຈະແຈ້ງ, ຊັດເຈນ ແລະ ເປັນຮູບປະທຳ.

ພ້ອມນັ້ນ, ຄະນະປະຈຳສະພາແຫ່ງຊາດ ເຫັນດີໂດຍພື້ນຖານອະນຸມັດດ້ານຫຼັກການໃຫ້ລັດຖະບານປັບປຸງດັດຊະນີເງິນເດືອນ, ເງິນນະໂຍບາຍ ແລະ ເງິນອຸດໜູນ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຄູ ແລະ ພະນັກງານບຳນານ ເພື່ອຈະເລີ່ມຈັດຕັ້ງປະຕິບັດໃນເດືອນ 1 ປີ 2026 ແລະ ອະນຸມັດດ້ານຫຼັກການໃນການດັດແກ້ງົບປະມານປີ 2025.



## ສຈ. ປອ. ຈະເລີນ...

(ຕໍ່ຈາກໜ້າ 1)

ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ເຜີຍແຜ່ເອກະສານກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ບົດຮຽນກ່ຽວກັບການຄົ້ນຄວ້າໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນຂອງ ສພຂ, ການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີX ແລະ ສະພາປະຊາຊົນຂັ້ນແຂວງຊຸດທີ V ແນໃສ່ສ້າງຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານດັ່ງກ່າວໃຫ້ມີຄວາມເລິກເຊິ່ງ; ເປັນການຊຸກຍູ້, ແນະນຳ ແລະ ສ້າງຄວາມເປັນເອກະພາບກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງ ສພຂ ທັງເປັນຂໍ້ມູນ, ບ່ອນອີງ ໃຫ້ແກ່ການຄົ້ນຄວ້າ,ປັບປຸງກົງຈັກການຈັດຕັ້ງຂອງສະພາໃນຊຸດຕໍ່ໄປໃຫ້ເປັນລະບົບ, ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນໃຫ້ແກ່ການເສີມຂະຫຍາຍແລະການຍົກສູງບົດບາດການນຳພາຂອງພັກເວົ້າລວມ ໂດຍສະເພາະການຍົກສູງບົດບາດຂອງສະພາໃຫ້ມີຄວາມເຂັ້ມແຂງ, ເລິກເຊິ່ງ, ຮອບດ້ານ ສົມຄູ່ກັບການເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ. ຈາກນັ້ນ, ໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນຕໍ່ວຽກງານດັ່ງກ່າວຮ່ວມກັນ ໂດຍສະເພາະດ້ານກົນໄກການປະສານງານລະຫວ່າງສພຂກັບອົງການປົກຄອງແຂວງ, ບາດກ້າວຂັ້ນຕອນການຈັດຕັ້ງປະຕິບັດພາລະບົດບາດຂອງສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ, ໂຄງປະກອບບຸກຄະລາກອນ ແລະ ອື່ນໆ.

ວັນທີ 4 ພະຈິກ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ພ້ອມຄະນະ ໄດ້ສືບຕໍ່ເຄື່ອນໄຫວວຽກງານ ແລະ ຢ້ຽມຢາມສະພາປະຊາຊົນແຂວງຄຳມ່ວນ ໂດຍການຕ້ອນຮັບຂອງທ່ານ ບົວພັນ ແສງຈັນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ມີບັນດາທ່ານໃນ ຄປຈສພຂ, ສສຂ ປະຈຳເຂດເລືອກຕັ້ງເມືອງ, ຄະນະເລຂາທິການ, ຫົວໜ້າ/ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນ ສພຂ ເຂົ້າຮ່ວມ.

ທ່ານ ບົວພັນ ແສງຈັນ ໄດ້ລາຍງານໂດຍສັງເຂບການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງຄຳມ່ວນ ໄລຍະ 4 ປີຜ່ານມາ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມ 3 ພາລະບົດບາດຕົ້ນຕໍຄື: ການພິຈາລະນາ ແລະ ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ, ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ວຽກງານຕິດຕາມກວດກາການເຄົາລົບປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການປົກຄອງທ້ອງຖິ່ນ;ການພົບປະຜູ້ມີສິດເລືອກຕັ້ງ ທີ່ຕິດພັນກັບການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ແລະສະໄໝວິສາມັນຂອງສພຊ ແລະ ສພຂ ແລະ ວຽກງານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງຄຳມ່ວນ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານດີເດັ່ນຮອບດ້ານໃນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງຄຳມ່ວນຕະຫຼອດໄລຍະຜ່ານມາ ທັງທວນຄືນມູນເຊື້ອປະຫວັດຄວາມເປັນມາ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນແຕ່ລະໄລຍະແລະເນັ້ນໜັກໃຫ້ເອົາໃຈໃສ່ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V, ເສີມຂະຫຍາຍບົດບາດສິດເປັນເຈົ້າສິດປະຊາທິປະໄຕຂອງປະຊາຊົນຕາມລັດຖະທຳມະນູນແລະກົດໝາຍ, ມີຄວາມສາມັກຄີຮັກແພງກັນພາຍໃນ,ສືບຕໍ່ຊີ້ນຳ-ນຳພາຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນຕາມພາລະບົດບາດ, ສິດ ແລະ ໜ້າທີ່ທີ່ໄດ້ກຳນົດໄວ້ໃນກົດໝາຍໃຫ້ສູງຂຶ້ນ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມອບປຶ້ມກົດໝາຍຈຳນວນໜຶ່ງໃຫ້ແກ່ສະພາປະຊາຊົນແຂວງຄຳມ່ວນ, ເຄື່ອນໄຫວຢ້ຽມຊົມກິດຈະການໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນແຄມຝັ່ງແມ່ນ້ຳຂອງຢູ່ເຂດວັດພຣະທາດສີໂຄດຕະບອງ.




# ຄຸນຄ່າຂອງໜັງສືໃບລານ

# ດົ້ນກົບເມກ

ອາທິດຜ່ານມາ, ຜູ້ຂຽນໄດ້ມີໂອກາດເຂົ້າຮ່ວມຝຶກອົບຮົມເປັນຄັ້ງທີ 2 ທີ່ຫ້ອງປະຊຸມຂອງກົມວັນນະຄະດີ ແລະ ພິມຈຳໜ່າຍ, ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ເປັນເວລາ 5 ມື້ ເຊິ່ງຄັ້ງທີໜຶ່ງໄດ້ເຂົ້າຮ່ວມຢູ່ແຂວງສະຫວັນນະເຂດ ຈຶ່ງພໍສັງລວມໄດ້ຫຼາຍແງ່ມຸມຂອງຄຸນຄ່າໜັງສືໃບລານ ເຊິ່ງບັນພະບຸລຸດເຮົາໄດ້ສັນສ້າງ-ບັນທຶກຄວາມຮູ້ພູມປັນຍາ ດ້ວຍອັກສອນລາວບູຮານ ແລະ ໂຕທຳ ເພື່ອບັນທຶກຄຳສອນ-ຮີດຄອງປະເພນີ-ສິລະປະວັດທະນະທຳ, ຕຳລາຢາ ຫຼື ກົດໝາຍບູຮານ, ການແຕ່ງຕັ້ງປັກໝາຍໜ້າທີ່ຕຳແໜ່ງ ແລະ ເຂດແດນບ້ານເມືອງ, ວັດທະນະທຳຂີດຂຽນບັນທຶກພູມປັນຍາ-ບົດຮຽນ ທີ່ສັງລວມໄດ້ຈາກປາກົດການທຳມະຊາດ-ພຶດຕິກຳຂອງມະນຸດ; ທັງໝົດທີ່ເວົ້າມາ ມັນຄືຄຸນຄ່າຂອງໜັງສືໃບລານທີ່ເຮັດໜ້າທີ່ບັນຈຸຮອງຮັບຄວາມຮູ້ຫຼາຍສາຂາ ໃຫ້ຄົນຮຸ່ນເຮົາໄດ້ສຶກສາຮຽນຮູ້ ແລະ ສືບທອດພູມປັນຍາຍອດຍິ່ງນັ້ນ ບໍ່ໃຫ້ສູດສ້ອຍສູນຫາຍໄປຕາມການເວລາ ຫຼື ປ່ອຍປະລະເລີຍໃຫ້ມັນສູນເສຍໄປຕາມກະແສແຮງຂອງເສດຖະກິດ. ຄົງເປັນໜ້າເສຍໃຈນໍ! ຖ້າວ່າໜັງສືໃບລານຫາກຖືກຮັກສາໄວ້ໃນຕູ້, ບໍ່ມີຄົນນຳມາອ່ານ-ເຜີຍແຜ່ ຫຼື ຜູ້ທີ່ອ່ານບໍ່ໄດ້ກໍແມ່ນຂໍ້ທີ່ພາໃຫ້ຄິດໜັກຕື່ມອີກ; ດັ່ງນັ້ນ, ການສຶກສາ-ຝຶກອົບຮົມ ແລະ ການຖ່າຍທອດວິທີອ່ານ, ຄົ້ນຄວ້າ, ຂີດຂຽນ ຈຶ່ງແມ່ນທາງອອກທີ່ດີຕໍ່ການສືບຕໍ່ກໍ່ສ້າງກ້າວໄປສູ່ການພັດທະນາປະລິວັດອັກສອນ, ປັບປຸງດັດແກ້ພູມປັນຍາຂອງອະດີດ ມາຮັບໃຊ້ປັດຈຸບັນ ນຳໄປສູ່ອະນາຄົດທີ່ໃສແຈ້ງ ດີກວ່າຫຼົງລືມ, ປະປ່ອຍຖືເບົາເຫັນແຕ່ແກ່ປາກທ້ອງ ຈົນດວງຕາມືດມົວແນມບໍ່ເຫັນພູມປັນຍາຂອງບັນພະບຸລຸດ.

ຄຸນຄ່າຂອງໜັງສືໃບລານ ຍັງເຮັດໜ້າທີ່ບອກທາງດ້ານໂຫລາສາດ-ວັນເດືອນປີກໍ່ສ້າງບ້ານເມືອງ, ໜັງສືໃບລານບາງຜູກ ກໍບັນທຶກປະຫວັດສາດຄວາມເປັນມາຂອງຮີດຄອງປະເພນີ ວັດທະນະທຳ ທີ່ເປັນຈິດວິນຍານຂອງຄວາມເປັນມະນຸດໃນຊາດໜຶ່ງ ເຊິ່ງບໍ່ແມ່ນນັບຖືເອົາຈຳນວນຕົວເລກຄວາມລ້ຳລວຍເປັນຄຳຕອບ ເຊິ່ງສຸດທ້າຍຈະເສຍດາຍຕາມພາຍຫຼັງ.




## ຍົກສູງ...

(ຕໍ່ຈາກໜ້າ 1)

ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ), ລັດຖະມົນຕີ, ຮອງລັດຖະມົນຕີກະຊວງ ແລະ ອົງການທີ່ກ່ຽວຂ້ອງພ້ອມດ້ວຍແຂກຖືກເຊີນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ມີຄຳເຫັນກ່າວເປີດວ່າ: ການດຳເນີນກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນກ່ອນຈະດຳເນີນກອງປະຊຸມສະໄໝສາມັນແຕ່ລະຄັ້ງ ແມ່ນກົນໄກຂອງສະພາແຫ່ງຊາດ ເພື່ອຮັບຟັງການລາຍງານຂອງກະຊວງ, ອົງການທີ່ຕິດພັນກັບຫົວຂໍ້ກອງປະຊຸມ ແລະ ສະມາຊິກສະພາແຫ່ງຊາດ ໄດ້ຄົ້ນຄ້ວາ, ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ ເພື່ອຊອກວິທີແກ້ໄຂຊ່ວຍລັດຖະບານ ທັງເປັນການສ້າງຄວາມເຂົ້າໃຈ ແລະ ເປັນເອກະພາບສູງຕໍ່ບັນດາເນື້ອໃນຢ່າງເລິກເຊິ່ງ ຮັບປະກັນໃຫ້ແກ່ການອອກມະຕິຮັບຮອງເອົາດ້ວຍຄະແນນສຽງສູງ.

ໃນກອງປະຊຸມ, ບັນດາສະມາຊິກສະພາແຫ່ງຊາດ ໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນຢ່າງສ້າງສັນ, ກົງໄປກົງມາ ຕໍ່ບັນດາບົດລາຍງານຂອງລັດຖະບານຄື: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ປະຈຳປີ 2025, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນເງິນຕາ ປະຈຳປີ 2025; ບົດລາຍງານຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ປະຈຳປີ 2026, ຮ່າງແຜນງົບປະມານແຫ່ງລັດ 5 ປີ (2026-2030), ປະຈຳປີ 2026 ແລະ ຮ່າງແຜນເງິນຕາ ປະຈຳປີ 2026; ບົດລາຍງານແຜນການດັດແກ້ງົບປະມານແຫ່ງລັດ ລາຍຮັບ-ລາຍຈ່າຍວິຊາການ ຂອງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ປີ 2025 ແລະ ເງິນເກີນແຜນປີ 2024; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030), ປະຈຳປີ 2026 ຂອງອົງການກວດສອບແຫ່ງລັດ, ບົດລາຍງານຜົນການກວດສອບ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030), ປະຈຳປີ 2026 ຂອງອົງການກວດກາແຫ່ງລັດ, ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2023 ຂອງອົງການກວດກາແຫ່ງລັດ.

ໃນພິທີປິດ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນສະຫຼຸບປິດກອງປະຊຸມ ເຊິ່ງທ່ານໄດ້ຊົມເຊີຍຕໍ່ຄວາມຫ້າວຫັນ, ຄວາມບຸກບືນສູ້ຊົນຂອງບັນດາທ່ານ ສສຊ ແລະ ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ທັງເນັ້ນໜັກໃຫ້ບັນດາທ່ານ ສສຊ ໃນເວລາເຂົ້າຮ່ວມກອງປະຊຸມສະໄໝເທື່ອທີ 10 ຈົ່ງເພີ່ມທະວີຄວາມເອົາໃຈໃສ່ໃນການຄົ້ນຄວ້າ, ວິເຄາະວິໄຈຢ່າງລະອຽດເລິກເຊິ່ງ, ນຳເອົາສະພາບການ, ຄວາມຄິດຄວາມເຫັນ, ຄວາມມຸ່ງມາດປາຖະໜາຂອງປະຊາຊົນບັນດາເຜົ່າຢູ່ເຂດເລືອກຕັ້ງຂອງຕົນ ເປັນຂໍ້ມູນໃນການຄົ້ນຄວ້າປະກອບຄຳເຫັນ ເພື່ອເຮັດໃຫ້ການພິຈາລະນາຮັບຮອງເອົາບັນຫາສຳຄັນຂອງຊາດ ມີຄວາມສອດຄ່ອງກັບສະພາບຕົວຈິງຂອງປະເທດເຮົາ, ສາມາດຈັດຕັ້ງປະຕິບັດໄດ້ຮັບໝາກຜົນ ແລະ ແກ້ໄຂບັນຫາຕ່າງໆຢ່າງມີປະສິດທິຜົນ; ປະກອບຄຳເຫັນສ່ອງແສງໃຫ້ເຫັນສະພາບຕົວຈິງຂອງທ້ອງຖິ່ນ, ຄວາມມຸ່ງມາດປາຖະໜາຂອງຜູ້ມີສິດເລືອກຕັ້ງ ລວມທັງການສະເໜີວິທີການແກ້ໄຂ ເພື່ອສ່ອງແສງໃຫ້ເຫັນຄວາມຮັບຜິດຊອບຮ່ວມກັນ ໃນການຊອກຫາວິທີການແກ້ໄຂບັນຫາໃຫ້ມີຄວາມເປັນເອກະພາບ, ສອດຄ່ອງຕາມກົດໝາຍ, ມີເຫດຜົນ ແລະ ແທດກັບຕົວຈິງຮ່ວມກັນລະຫວ່າງສະພາແຫ່ງຊາດ, ລັດຖະບານ ແລະ ພາກສ່ວນກ່ຽວຂ້ອງທັງຢູ່ສູນກາງແລະທ້ອງຖິ່ນ.

**(ນາງ ກຸກກິກ ບຸດດາໄຊ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 4)

ຄວ້າ ແລະ ຕີລາຄາຄືນ ການເຄື່ອນໄຫວວຽກງານຂອງຄະນະມິດຕະພາບລັດຖະສະພາລາວກັບລັດຖະສະພາຕ່າງປະເທດ, ຄະນະສະມາຊິກສະພາແຫ່ງຊາດໜຸ່ມ ແລະ ເພດຍິງ ໃຫ້ເປັນຮູບປະທຳ; ສືບຕໍ່ຍາດແຍ່ງການຊ່ວຍເຫຼືອທາງດ້ານທຶນຮອນ, ວັດຖຸອຸປະກອນເພື່ອຍົກສູງແລະສ້າງຄວາມເຂັ້ມແຂງທາງດ້ານວິຊາການ, ວິຊາສະເພາະ, ພາສາຕ່າງປະເທດ ແລະ ອື່ນໆ; ຕິດຕາມ, ຄົ້ນຄວ້າວິເຄາະວິໄຈ ແລະ ລາຍງານສະພາບການທີ່ພົ້ນເດັ່ນຂອງພາກພື້ນ ແລະ ສາກົນ, ອົງການລັດຖະສະພາຕ່າງໆ ແລະ ຄົ້ນຄວ້າທັດສະນະຂອງສະພາແຫ່ງຊາດລາວ ຕໍ່ບັນຫາຕ່າງໆ, ບັນດາຂໍ້ສະເໜີຕ່າງໆ ທີ່ຂໍການສະໜັບສະໜູນ ໂດຍປະສານສົມທົບກັບກະຊວງການຕ່າງປະເທດ ແລະ ຄະນະພົວພັນຕ່າງປະເທດສູນກາງພັກ ຢ່າງກົມກຽວ ເພື່ອເປັນເອກະພາບກັນໃນການເອົາທັດສະນະຕໍ່ບັນຫາຕ່າງໆ ໃນການເຄື່ອນໄຫວຕ່າງປະເທດ; ສືບຕໍ່ປັບປຸງປຶ້ມ 50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໃຫ້ສຳເລັດ; ປະກອບສ່ວນຂຽນຜົນງານການເຄື່ອນໄຫວວຽກງານຕ່າງປະເທດຂອງສະພາແຫ່ງຊາດ ແຕ່ຊຸດທີ I ເຖິງຊຸດທີ IX ເພື່ອໃຫ້ທັນກັບການສະເຫຼີມສະຫຼອງຄົບຮອບ 50 ປີ ວັນສ້າງຕັ້ງສະພາແຫ່ງຊາດລາວ ໃນທ້າຍປີນີ້.

ກອງປະຊຸມຄົບຄະນະຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດທີ່ດີ, ເຕັມໄປດ້ວຍເນື້ອໃນອັນອຸດົມສົມບູນ, ຄວາມຮັບຜິດຊອບທາງດ້ານການເມືອງ, ປະກອບຄຳຄິດເຫັນຢ່າງຫ້າວຫັນ ແລະ ກົງໄປກົງມາ ຈຶ່ງເຮັດໃຫ້ກອງປະຊຸມທີ່ມີຄວາມໝາຍສຳຄັນໃນຄັ້ງນີ້ ໄດ້ຮັບຜົນສຳເລັດຢ່າງຈົບງາມ.

## ສູ້ຊົນ...

(ຕໍ່ຈາກໜ້າ 1)

ມະຫາພາກໃຫ້ມີສະຖຽນລະພາບ, ຊຸກຍູ້ການເກັບລາຍຮັບໃຫ້ເພີ່ມຂຶ້ນ ດ້ວຍການເກັບລາຍຮັບໃຫ້ຄົບຖ້ວນ ແລະ ນຳໃຊ້ເຄື່ອງທັນສະໄໝໃນການຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ, ປັບປຸງກົນໄກການຄຸ້ມຄອງລາຍຈ່າຍໃຫ້ມີປະສິດທິ.

2) ສູ້ຊົນເກັບລາຍຮັບງົບປະມານແຫ່ງລັດປີ 2026 ໃຫ້ໄດ້ບໍ່ຫຼຸດ 20% ຂອງ GDP; ສ້າງນະໂຍບາຍຊຸກຍູ້ສົ່ງເສີມໃຫ້ມີຫົວໜ່ວຍລາຍຮັບໃໝ່ເພີ່ມຂຶ້ນ ແລະຍູ້ການຫັນເປັນທັນສະໄໝໃນການເກັບລາຍຮັບ.

3) ສືບຕໍ່ດຳເນີນນະໂຍບາຍເງິນຕາແບບປະສົມປະສານທັງປະເມີນ ແລະ ທົບທວນຄືນອັດຕາດອກເບ້ຍພື້ນຖານ, ອັດຕາສ່ວນເງິນແຮຝາກບັງຄັບ; ຄວບຄຸມປະລິມານເງິນ M2 ໃຫ້ສົມຄູ່ກັບການຂະຫຍາຍຕົວຂອງເສດຖະກິດ ແລະ ສອດຄ່ອງກັບການດຳເນີນນະໂຍບາຍເງິນຕາ.

4) ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ, ປັບປຸງ ແລະ ພັດທະນາຕະຫຼາດຊື້-ຂາຍເງິນຕາຜ່ານລະບົບເອເລັກໂຕຣນິກ (LFX) ໃຫ້ກວ້າງຂຶ້ນຕື່ມ.

5) ສືບຕໍ່ຄຸ້ມຄອງທຸກແຫຼ່ງເງິນຕາຕ່າງປະເທດໃຫ້ເຂົ້າສູ່ລະບົບທະນາຄານໃຫ້ຫຼາຍຂຶ້ນ ທັງປຸກລະດົມສັງຄົມໃຫ້ຍົກສູງຄຸນຄ່າເງິນກີບ, ສ້າງກົນໄກນຳໃຊ້ສະກຸນເງິນທ້ອງຖິ່ນ ເຂົ້າໃນການຊຳລະສິນຄ້າແລະບໍລິການ ຢູ່ ສປປລາວ ກັບບັນດາປະເທດອ້ອມຂ້າງ ແລະ ປະເທດຄູ່ຄ້າແບບສອງຝ່າຍ.

6) ສືບຕໍ່ປັບປຸງສະພາບແວດລ້ອມການລົງທຶນ ໃຫ້ມີຄວາມສະດວກ, ກະທັດຮັດ ແລະ ວ່ອງໄວ ຫຼຸດຜ່ອນຂອດຂັ້ນ ແລະ ແກ້ໄຂສິ່ງອຸດຕັນຕ່າງໆ ທັງເພີ່ມທະວີການຕິດຕາມ ແລະ ປະເມີນໂຄງການທີ່ໄດ້ອະນຸມັດ ໃຫ້ດຳເນີນໄປຕາມສັນຍາທີ່ໄດ້ຕົກລົງກັນ.

7) ສືບຕໍ່ຊຸກຍູ້ໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງຕາມຂະແໜງເສດຖະກິດປາຍແຫຼມ ໂດຍສະເພາະບັນດາໂຄງການພະລັງງານສະອາດແລະພະລັງງານທາງເລືອກ, ຊຸກຍູ້ການພັດທະນາໂຄງການສາຍສົ່ງເຊື່ອມຕໍ່ 500 kV ລາວ-ຈີນ ແລະ ສ້າງສາຍສົ່ງ 230 kV ເຊື່ອມຕໍ່ກັບພາຍໃນ.

8.) ເຂັ້ມງວດການຄຸ້ມຄອງບັນດາໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ແລະ ສົ່ງເສີມການປຸງແຕ່ງແຮ່ທາດເປັນຜະລິດຕະພັນສຳເລັດຮູບກ່ອນສົ່ງອອກ; ສົ່ງເສີມການຜະລິດແນວພັນພືດ-ສັດ, ຝຸ່ນ-ປຸ໋ຍ ແລະ ອາຫານສັດເພື່ອຊົມໃຊ້ພາຍໃນ; ເພີ່ມທະວີດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດໃຫ້ເພີ່ມຂຶ້ນ.

9) ສົ່ງເສີມ ແລະ ພັດທະນາຈຸນລະວິສາຫາກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃຫ້ເຂັ້ມແຂງ.

10) ປັບປຸງ ແລະ ກໍ່ສ້າງບັນດາເສັ້ນທາງຄົມມະນາຄົມ ລວມທັງປັບປຸງບັນດາໂຄງລ່າງທີ່ໄດ້ຮັບຜົນກະທົບຈາກໄພພິບັດໃຫ້ສຳເລັດ; ສືບຕໍ່ຊຸກຍູ້ນັກລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດກໍ່ສ້າງເສັ້ນທາງດ່ວນ ແລະ ທາງດ່ວນຄູ່ຂະໜານທາງ R3, ທາງລົດໄຟ ແລະ ທາງດ່ວນອື່ນໆ.

11) ຍົກລະດັບໂຄງລ່າງພື້ນຖານໂທລະຄົມມະນາຄົມໃຫ້ໄດ້ມາດຕະຖານສາກົນ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ທັງຊຸກຍູ້ ແລະ ສົ່ງເສີມການພັດທະນາອຸດສາຫະກຳດີຈີຕອນ, ການຄົ້ນຄວ້ານຳໃຊ້ເຕັກໂນໂລຊີລະດັບສູງ.

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ປະຈຳເດືອນພະ ຈິກ 2025. ກອງປະຊຸມຄັ້ງນີ້ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ພິຈາລະນາ ຕໍ່ບັນດາຫົວຂໍ້ທີ່ສຳຄັນຄື:

ວາລະທີ 1: ການສະຫຼຸບວຽກງານພົ້ນເດັ່ນປະຈຳເດືອນຕຸລາ ແລະ ທິດທາງແຜນການປະຈຳເດືອນພະຈິກ 2025 ຂອງລັດຖະບານ; ທິດຜັນຂະຫຍາຍຜົນກອງປະຊຸມຄົບຄະນະ ຄັ້ງທີ 11 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ແລະ ການກະກຽມຄວາມພ້ອມລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX; ລາຍງານສະພາບສາກົນ ແລະ ພາກພື້ນທີ່ພົ້ນເດັ່ນ; ລາຍງານສະພາບພົ້ນເດັ່ນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ໃນນັ້ນ:

ການສະຫຼຸບວຽກງານພົ້ນເດັ່ນປະຈຳເດືອນຕຸລາ 2025 ເຫັນວ່າ ເຖິງສະພາບການສາກົນ ແລະ ພາກພື້ນ ຍັງສືບຕໍ່ຜັນແປໄປຢ່າງສັບສົນ ເຊິ່ງໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາທັງທາງກົງ ແລະ ທາງອ້ອມ ຢ່າງຫຼີກລ່ຽງບໍ່ໄດ້, ແຕ່ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໄດ້ສືບຕໍ່ສູ້ຊົນຈັດຕັ້ງປະຕິບັດບັນດາວຽກຈຸດສຸມທີ່ກຳນົດໄວ້ໃນບັນດາມະຕິຂອງສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາຕາມມະຕິກອງປະຊຸມລັດຖະບານເປີດກວ້າງຄັ້ງທີ I ປີ 2025 ໄດ້ມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ ທົ່ວປະເທດສືບຕໍ່ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ສາມາດຈັດເກັບລາຍຮັບເຂົ້າງົບປະມານໄດ້ 59,858 ຕື້ກີບ ເທົ່າກັບ 88% ຂອງແຜນປີ, ການປະຕິບັດແຜນລາຍຈ່າຍໄດ້ 47,631 ຕື້ກີບ ເທົ່າກັບ 67% ຂອງແຜນປີ, ການຄວບຄຸມອັດເງິນເຟີ້ ຫຼຸດລົງຈາກ 4.5% ໃນເດືອນກັນຍາ ເປັນ 4% ໃນເດືອນຕຸລາ, ສາມາດເພີ່ມຄັງສຳຮອງເງິນຕາຕ່າງປະເທດ ກຸ້ມການນຳເຂົ້າ 5.24 ເດືອນ, ສາມາດຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ຕາມຂໍ້ຜູກພັນສັນຍາ; ໄດ້ສຸມໃສ່ປະຕິບັດມາດຕະການດ້ານການຄ້າ ໂດຍສະເພາະການຄຸ້ມຄອງລາຄາສິນຄ້າ, ຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າ ເຂັ້ມງວດຫຼາຍຂຶ້ນ; ໄດ້ສຸມໃສ່ການຜະລິດກະ ສິກຳເພື່ອຄໍ້າປະກັນສະບຽງອາຫານ, ການຜະລິດເພື່ອທົດແທນການນຳເຂົ້າ ແລະ ການຜະລິດເພື່ອສົ່ງອອກ; ໄດ້ສຳເລັດການກວດກາ, ປະເມີນຄືນທັງໝົດບັນດາໂຄງການຂຸດຄົ້ນແຮ່ທາດພ້ອມທັງໄດ້ແກ້ໄຂບັນດາໂຄງການທີ່ຖືກຈັດຢູ່ໃນປະເພດອ່ອນ ແລະ ຫັນໂຄງການທົດລອງ ເປັນໂຄງການຕາມກົນໄກປົກກະຕິ; ໄດ້ສຸມໃສ່ແກ້ໄຂສະພາບຂາດເຂີນໄຟຟ້າໂດຍເລັ່ງສ້າງພະລັງງານແສງຕາເວັນຂະໜາດນ້ອຍ 5MW ລົງມາເສີມໃສ່ສະຖານີໄຟຟ້າໃນຈຸດທີ່ຂາດເຂີນໄຟຟ້າ, ສຸມໃສ່ຊຸກຍູ້ໂຄງການພະລັງງານໄຟຟ້າທີ່ໄດ້ຮັບອະນຸມັດແລ້ວ ໃຫ້ດຳເນີນການກໍ່ສ້າງສຳເລັດຕາມແຜນ; ໄດ້ສືບຕໍ່ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງໃນຂອບເຂດທົ່ວປະເທດໃຫ້ມີຄວາມຄືບໜ້າໄວ ໂດຍສຸມໃສ່ປະຕິບັດໂຄງການກໍ່ສ້າງທີ່ເປັນບຸລິມະສິດຂອງລັດຖະບານ, ໂຄງການຟື້ນຟູທາງຫຼວງທີ່ເປ່ເພ ແລະ ໄດ້ຮັບຜົນກະທົບຈາກໄພທຳມະຊາດເພື່ອສາມາດສັນຈອນໄປ-ມາໄດ້ສະດວກ, ທັງເຊື່ອມຈອດເຊື່ອມໂຍງພາຍໃນພາກພື້ນ ແລະ ສາກົນເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ; ໄດ້ແກ້ໄຂບັນຫາການຂາດເຂີນຄູສອນໄດ້ໂດຍພື້ນຖານ ແລະ ການປະລະການຮຽນມີທ່າອຽງດີຂຶ້ນ, ທັງໄດ້ສຸມໃສ່ສ້າງເງື່ອນໄຂອຳນວຍຄວາມສະດວກປິ່ນອ້ອມຕ່າງໆໃຫ້ແກ່ງານມະຫະກຳກິລາແຫ່ງຊາດຄັ້ງທີ 12, ງານມະ-ຫະກຳກິ-ລາຄົນພິ-ການແຫ່ງຊາດ ຄັ້ງທີ 4, ງານບຸນນະມັດສະການພຣະທາດຫຼວງ, ການສະເຫຼີມສະຫຼອງວັນສະຖາປະນາ ສປປລາວ ຄົບຮອບ 50 ປີ; ໄດ້ສຸມໃສ່ໃຫ້ການຊ່ວຍເຫຼືອແກ່ແຂວງທີ່ໄດ້ຮັບຜົນກະທົບຈາກໄພພິບັດປີໃນຜ່ານມາໂດຍສະເພາະໄດ້ສະໜອງງົບປະມານເພື່ອຊຳລະໂຄງການຟື້ນຟູສຸກເສີນລວມ 82 ໂຄງການ ມູນຄ່າ




ເກືອບ 95 ຕື້ກີບ; ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕ່າງປະເທດຢ່າງມີໄຫວພິບໂດຍສຳເລັດການກະກຽມ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຢ້ຽມຢາມບັນດາປະເທດເພື່ອນມິດ ແລະ ເຂົ້າຮ່ວມບັນດາກອງປະຊຸມສາກົນຂອງການນຳຂັ້ນສູງຂອງພັກ-ລັດ, ຕ້ອນຮັບການມາຢ້ຽມຢາມລັດຖະກິດ, ຢ້ຽມຢາມທາງການ ຂອງຜູ້ນຳປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ຢູ່ ສປປລາວ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ກໍຍັງມີວຽກງານຈຳນວນໜຶ່ງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃຫ້ມີການຫັນປ່ຽນດີຂຶ້ນກວ່າເກົ່າ ເປັນຕົ້ນ ການແກ້ໄຂປາກົດການຫຍໍ້ທໍ້ທາງດ້ານສັງຄົມ, ບັນຫາຄ່າຄອງຊີບ, ລາຄາສິນຄ້າ-ໄຟຟ້າ-ນ້ຳມັນເຊື້ອໄຟທີ່ປັບຂຶ້ນບາງໄລຍະ, ການຄຸ້ມຄອງການຂຸດຄົ້ນແຮ່ທາດ, ການຈຳກັດການນຳເຂົ້າສິນຄ້າຟຸມເຟືອຍ, ການພັດທະນາ-ປັບປຸງພື້ນຖານໂຄງລ່າງເສັ້ນທາງ, ການຄຸ້ມຄອງ ແລະ ແກ້ໄຂບັນຫາຂ່າວບິດເບືອນຜ່ານສື່ສັງຄົມອອນລາຍ, ການເຄົາລົບລະບຽບ-ກົດໝາຍ ແລະ ອື່ນໆ.

ສຳລັບທິດທາງແຜນວຽກຈຸດສຸມປະຈຳເດືອນພະຈິກ 2025, ກອງປະຊຸມໄດ້ຊີ້ນຳຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ບັນດາວຽກງານສຳຄັນດັ່ງນີ້:

1. ສືບຕໍ່ເອົາໃຈໃສ່ປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ສືບຕໍ່ລົງກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕິດພັນວຽກງານ 3 ສ້າງ ໂດຍສະເພາະຢູ່ຈຸດລໍ່ແຫຼມ ແລະ ເຂດຫ່າງໄກສອກຫຼີກ; ສືບຕໍ່ແກ້ໄຂປາກົດການຫຍໍ້ທໍ້ທາງສັງຄົມໃຫ້ຫຼຸດໜ້ອຍຖອຍລົງ; ສືບຕໍ່ປະຕິບັດແຜນປ້ອງກັນຮັກສາຄວາມສະຫງົບປອດໄພ ໃຫ້ແກ່ງານສະເຫຼີມສະຫຼອງວັນຊາດຄົບຮອບ 50 ປີ, ງານມະຫະກຳກິລາແຫ່ງຊາດ ຄັ້ງທີ 12.

2. ສືບຕໍ່ກະກຽມບັນດາເນື້ອໃນທີ່ຈະນຳໄປລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ສຳເລັດທັນກຳນົດເວລາ.

3. ສືບຕໍ່ກະກຽມຄວາມພ້ອມຮອບດ້ານເພື່ອສະເຫຼີມສະຫຼອງວັນສຳຄັນຂອງພັກ-ລັດ ແລະ ງານບຸນປະເພນີຕ່າງໆ ເປັນຕົ້ນ ວັນສະຖາປະນາ ສປປລາວ ຄົບຮອບ 50 ປີ, ວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 105 ປີ ແລະ ງານມະຫະກຳກິລາແຫ່ງຊາດ ຄັ້ງທີ 12.

4. ສືບຕໍ່ສຸມໃສ່ປະຕິບັດບັນດາມາດຕະການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເປັນຕົ້ນ ມາດຕະການຄຸ້ມຄອງອັດຕາແລກປ່ຽນເງິນຕາ, ມາດຕະການແກ້ໄຂໜີ້ສິນ, ມາດຕະການຈຳກັດການນຳເຂົ້າສິນຄ້າຟຸມເຟືອຍ, ມາດຕະການສົ່ງເສີມການຜະລິດສິນຄ້າທົດແທນການນຳເຂົ້າ ຕິດພັນກັບການສ້າງເສດຖະກິດຕາມທິດ ເສດຖະກິດເອກະລາດ ເປັນເຈົ້າຕົນເອງ (ສອຈ).

5. ສືບຕໍ່ສຸມໃສ່ການຄຸ້ມຄອງບັນດາໂຄງການແຮ່ທາດໃຫ້ໄປຕາມກົດໝາຍ ແລະ ລະບຽບການ; ສືບຕໍ່ປະຕິບັດມາດຕະການຕໍ່ໂຄງການແຮ່ທາດທີ່ໄດ້ຜ່ານການປະເມີນ ແລະ ຈັດຢູ່ໃນປະເພດອ່ອນ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ; ສືບຕໍ່ຊຸກຍູ້ສົ່ງເສີມບັນດາໂຄງການທີ່ຢູ່ໃນໄລຍະຂຸດຄົ້ນ ໃຫ້ດຳເນີນການປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ, ຫຼຸດຜ່ອນການສົ່ງອອກວັດຖຸດິບ ໂດຍສະເພາະແຮ່ທາດທີ່ເປັນທ່າແຮງ.

6. ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ຕາມມະຕິຂອງຄະນະບໍລິຫານງານສູນກາງພັກເລກທີ 03/ຄບສພ ແລະ ມະຕິ ຂອງສະພາແຫ່ງຊາດ ເລກທີ 05/ສພຊ ໂດຍສະເພາະການສ້າງຕາແສງໃຫ້ສຳເລັດຕາມແຜນກຳນົດ.

7. ສືບຕໍ່ແກ້ໄຂບັນຫາຄູອາສາສະໝັກ ແລະ ແພດອາສາສະໝັກ ຕາມໂກຕາລັດຖະກອນທີ່ໄດ້ອະນຸມັດແລ້ວນັ້ນ ໃຫ້ສຳເລັດໄວ ເຊິ່ງການຈັດສັນໂກຕາຕ້ອງຮັບປະກັນຖືກເປົ້າໝາຍຄູ ແລະ ແພດທີ່ເປັນອາສາສະໝັກ.

8. ສືບຕໍ່ຕິດຕາມຊຸກຍູ້ການເຄື່ອນໄຫວວຽກງານຂອງບໍລິສັດ, ແຮງງານ ຢູ່ບັນດາເຂດເສດຖະກິດພິເສດ, ເຂດອຸດສາຫະກຳ, ນິຄົມອຸດສາຫະກຳ ໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍ; ສືບຕໍ່ພັດທະນາສີມືແຮງງານລາວໃຫ້ມີຄຸນນະພາບ; ເອົາໃຈໃສ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຄຸນງາມຄວາມດີ ລວມທັງຜູ້ທີ່ປະກອບສ່ວນໃນຂະບວນການສະເຫຼີມສະຫຼອງວັນຊາດ ຄົບຮອບ 50 ປີ.

9. ສືບຕໍ່ຈັດຕັ້ງປະຕິບັດມະຕິ 165/ສພຊ ກ່ຽວກັບນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງ ໃນໄລຍະໃໝ່ ກໍຄືມະຕິ 10/ລບ; ສືບຕໍ່ສຸມໃສ່ຊຸກຍູ້ບັນດາໂຄງການກໍ່ສ້າງເສັ້ນທາງທີ່ສຳຄັນບຸລິມະສິດ; ປັບປຸງບູລະນະ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນໃນຂອບເຂດທົ່ວປະເທດໃຫ້ສຳເລັດຕາມແຜນ ທັງຮີບຮ້ອນອອກຄຳແນະນຳກ່ຽວກັບການກຳນົດຮູບແບບ, ວິທີການ ແລະ ອັດຕາການເກັບຄ່າຜ່ານທາງ ສຳລັບເສັ້ນທາງສາຍເກົ່າທີ່ມອບໃຫ້ຜູ້ປະກອບການເປັນຜູ້ສ້ອມແປງ ແລະ ບົວລະບັດຮັກສາ ໃຫ້ເປັນເອກະພາບກັນໃນທົ່ວປະເທດ.

10. ຄົ້ນຄວ້ານະໂຍບາຍຕໍ່ 2 ແຂວງ (ຫົວພັນ ແລະ ຜົ້ງສາລີ) ທີ່ເປັນແຂວງທີ່ໝັ້ນຂອງການປະຕິວັດ ໃຫ້ສຳເລັດໄວ.

11. ຜັນຂະຫຍາຍຜົນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ ເຂົ້າສູ່ວຽກງານຕົວຈິງ.

12. ສືບຕໍ່ຜັນຂະຫຍາຍຜົນການໄປຢ້ຽມຢາມຕ່າງປະເທດຂອງການນຳຂັ້ນສູງຂອງພັກ-ລັດ ແລະ ຜົນກອງປະຊຸມລະດັບຕ່າງໆ; ກະກຽມໃຫ້ແກ່ການນຳຂັ້ນສູງຂອງພັກ-ລັດເດີນທາງໄປເຄື່ອນໄຫວຢ້ຽມຢາມ, ເຂົ້າຮ່ວມກອງປະຊຸມ ແລະ ເຮັດວຽກຢູ່ຕ່າງປະເທດ; ກະກຽມຕ້ອນຮັບການນຳຂັ້ນສູງ ແລະ ແຂກຕ່າງປະເທດ ທີ່ມາຢ້ຽມຢາມທາງການ ແລະ ເຂົ້າຮ່ວມສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 50 ປີ.

ວາລະທີ 2: ກອງປະຊຸມໄດ້ພິຈາລະນາຮ່າງນິຕິກຳ ຈຳນວນ 6 ສະບັບ ຄື: (1) ຮ່າງວິໄສທັດຮອດປີ 2045 ແລະ ແຜນຍຸດທະສາດການພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານແຫ່ງຊາດ ຮອດປີ 2035; (2) ຮ່າງດຳລັດວ່າດ້ວຍການຈັດສັນທີ່ດິນປຸກສ້າງຂອງລັດ ເປັນບ່ອນຢູ່ອາໄສ ແລະ ຊື້-ຂາຍ ສິດນຳໃຊ້ທີ່ດິນແບບມີກຳນົດ; (3) ຮ່າງດຳລັດວ່າດ້ວຍຢາງພາລາ; (4) ຮ່າງດຳລັດວ່າດ້ວຍການຄຸ້ມຄອງບໍລິເວນຊາຍແດນ; (5) ຮ່າງດຳລັດວ່າດ້ວຍພະນັກງານທ້ອງຖິ່ນທີ່ເຮັດວຽກນຳອົງການຕ່າງປະເທດປະຈຳຢູ່ສປປລາວ; ແລະ (6) ຮ່າງດຳລັດວ່າດ້ວຍການຄຸ້ມຄອງທະນະບັດ. ໃນນັ້ນ: ກອງປະຊຸມໄດ້ຊີ້ນຳໃຫ້ພາກສ່ວນກ່ຽວຂ້ອງ ນຳເອົາບັນດາຮ່າງນິຕິກຳດັ່ງກ່າວໄປປັບປຸງຕາມຄຳເຫັນຂອງສະມາຊິກລັດຖະບານ ເປັນຕົ້ນຊື່ຂອງບາງນິຕິກຳ, ໂຄງຮ່າງ, ການນຳໃຊ້ ແລະ ອະທິບາຍຄຳສັບ, ການກຳນົດຈຸດປະສົງ, ການກຳນົດຫຼັກການ, ການກຳນົດເງື່ອນໄຂຕ່າງໆ, ການຈັດລຽງເນື້ອໃນ, ການກຳນົດມາດຕະການຕໍ່ຜູ້ລະເມີດ ແລະ ອື່ນໆ ໃຫ້ເໝາະສົມ ແນໃສ່ເຮັດໃຫ້ບັນດານິຕິກຳດັ່ງກ່າວ ມີເນື້ອໃນລະອຽດ, ຈະແຈ້ງ, ຄົບຖ້ວນສົມບູນ, ຮັດກຸມ, ແທດຕົວຈິງ, ຈຳກັດໄດ້ຊ່ອງວ່າງຕ່າງໆ, ສອດຄ່ອງກັບນິຕິກຳທີ່ໄດ້ປະກາດນຳໃຊ້ແລ້ວ ທັງສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ.

**(ຂ່າວ ແລະ ພາບ: ກົມປະຊາສຳພັນ ຫສນຍ)**



ສຸກສະບາຍຫາຍໂຣຄ

# ເຄັດລັບຖະໜອມສາຍຕາຍແບບງ່າຍໆ

# ຮຽບຮຽງໂດຍ: ດອກຫຍ້າ



ສຳລັບຫຼາຍໆຄົນ ທີ່ເຮັດວຽກເປັນເວລາດົນຢູ່ໜ້າຈໍຄອມພິວເຕີ ຫຼື ຫຼິ້ນເກມ, ເຟສບຸກ ແລະ ອື່ນໆ ມື້ນີ້ເຮົາມີເຄັດລັບການຖະໜອມສາຍຕາແບບງ່າຍໆ ມາຝາກທຸກທ່ານ ເພື່ອສຸຂະພາບຂອງຕາທີ່ດີ ເພາະຕາຄືສິ່ງທີ່ລ້ຳຄ່າທີ່ສຸດໃນຮ່າງກາຍຂອງເຮົາ ດັ່ງນີ້:

1. ໃສ່ໃຈການຮັບປະທານອາຫານ: ການປົກປ້ອງດວງຕາ ໂດຍການໃສ່ໃຈເລື່ອງອາຫານທີ່ເຮົາກິນໃຫ້ຫຼາຍຂຶ້ນ ເຊິ່ງສານອາຫານເຊັ່ນ: ກົດໂອເມກ້າ 3, ໄຂມັນ, ລູທີນ, ສັງກະສີ ແລະ ວິຕາມິນ A, C ແລະ E ສາມາດຊ່ວຍໃນການເບິ່ງເຫັນ ອີກທັງຍັງຊ່ວຍປ້ອງກັນໂລກຈໍປະສາດຕາເສື່ອມ ແລະ ຕໍ້ກະຈົກ ຖ້າຫາກຢາກໃຫ້ໄດ້ຮັບຜົນທີ່ດີ ກໍຄວນຮັບປະທານຢ່າງສະໝໍ່າສະເໝີ.

2. ພັກຜ່ອນໃຫ້ພຽງພໍ: ການນອນພັກຜ່ອນບໍ່ພຽງພໍ ອາດເຮັດໃຫ້ຕາຂອງເຮົາຕູບ, ຕາແດງ, ຂອບຕາກໍ່າດໍາ ແລະ ມີຮ່ອງຮອຍ ສະນັ້ນ, ຄວນຫາເວລາພັກຜ່ອນນອນໃຫ້ເຕັມອີ່ມ ຢ່າງໜ້ອຍ 6-8 ຊົ່ວໂມງຕໍ່ມື້.

3. ບໍລິຫານດວງຕາຢ່າງເປັນປະຈໍາ: ໃນລະຫວ່າງມື້ ໃຫ້ບໍລິຫານດວງຕາຂອງຕົນເອງ ເຊິ່ງສາມາດເຮັດໄດ້ດ້ວຍວິທີງ່າຍໆເຊັ່ນ: ອາດຈະກະພິບຕາຖີ່ໆ, ເຫຼືອກຕາໄປມາຫຼືຫຼັບຕາຄ້າງໄວ້ໜ້ອຍໜຶ່ງ ເພື່ອໃຫ້ດວງຕາຜ່ອນຄາຍ ໃນເວລາທີ່ດວງຕາໃຊ້ງານໜັກ ກໍຊ່ວຍໄດ້ເຊັ່ນກັນ.

4. ພົກແວ່ນກັນແດດຕິດກະເປົາໄວ້: ແວ່ນກັນແດດສາມາດຊ່ວຍປົກປ້ອງດວງຕາຂອງເຮົາ ຈາກລັງສີອຸນຕຣາໄວໂອແລັດ ຫຼື ລັງສີ UV ໄດ້ດີອີກທາງໜຶ່ງ ເພາະວ່າການສໍາຜັດກັບລັງສີຢູວີຫຼາຍເກີນໄປຈະເຮັດໃຫ້ມີໂອກາດເປັນຕໍ້ກະຈົກ ແລະ ຈໍປະສາດຕາເສື່ອມຫຼາຍຂຶ້ນ ເມື່ອຮູ້ແລ້ວກໍຢ່າລືມພົກພາແວ່ນກັນແດດຕິດໂຕໄວ້ ເພື່ອກັນດີກ່ວາແກ້ພາຍຫຼັງເມື່ອສວາຍເກີນໄປ.

5. ຢຸດເຊົາການສູບຢາ ເພື່ອສາຍຕາດີຂຶ້ນ: ການສູບຢາ ຈະເຮັດໃຫ້ເຮົາເປັນໂລກຕໍ້ກະຈົກອີກທັງຍັງເປັນໂລກປະສາດຕາແລະ ຈໍປະສາດຕາເສື່ອມໄດ້ຫຼາຍຂຶ້ນ ທາງທີ່ດີຄວນສູບໜ້ອຍລົງຫຼືເຊົາສູບເລີຍຍິ່ງເປັນການດີ ທັງຕໍ່ຕົວທ່ານເອງ ແລະ ບຸກຄົນອ້ອມຂ້າງອີກດ້ວຍ.

**ຂໍ້ມູນຈາກ:**
**www.laopost.com**



ອາດ ກະວີລາວ

## ໃຜກໍຢາກໄດ້

# ເກດແກ້ວ ປົກພັນ

| | |
|---|---|
| ❊ ຢາກໄດ້ ເງິນແມ່ນຕ້ອງ | ສະແຫວງຊອກຫາວຫາ |
| ດ້ວຍເຫື່ອແຮງກາຍາ | ບວກສະຕິປັນຍາພ້ອມ |
| ບໍ່ແມ່ນມອງຊອມສິ້ງ | ຂະໂມຍຂອງເຂົາແລ່ນ |
| ຢ່າງເປີດແປນເກັ່ງກ້າ | ກົດໝາຍນັ້ນບໍ່ຢໍາເກງ |
| ❊ ເປັນນັກເລງລັກປຸ້ນ | ປົ້ນຈໍ່ຈໍາເອົາ |
| ເງິນຄໍາເຂົາມາມີ | ແບບຄືໂຈນຮ້າຍ |
| ທໍາລາຍກັນກຸມຂ້າ | ທາລຸນຕີຕ່ອຍ |
| ໄດ້ມາພຽງເລັກໜ້ອຍ | ສັງຊີກຸ້ມຄ່າກະທໍາ |
| ❊ ຍາມຕໍາຫຼວດຈັບໄດ້ | ຍັດໃສ່ຄຸກຄຸມຂັງ |
| ອານາຄົດມືວໝອງ | ມືດມົນເມືອໜ້າ |
| ຫາກິນສຸດຈະລິດນັ້ນ | ລາຍວັນດີກວ່າ |
| ເປັນຄົນຊາມຊົ່ວຊ້າ | ອາຍໜ້າເສື່ອມສັກສີ |
| ❊ ຢາກມັ່ງມີໝັ່ນສ້າງ | ສວນໄຮ່ທໍານາ |
| ສ້າງສາທໍາການຜະລິດ | ສິ່ງຂາຍເປັນສິນຄ້າ |
| ເງິນຈະມີມາເຂົ້າ | ກະເປົາຕົນເຕັມຕຶ່ງ |
| ຄອບຄົວກໍຊາບຊຶ້ງ | ຊາວບ້ານຊື່ນຊົມ |
| ❊ ເງິນໃຜກໍຢາກໄດ້ | ຈັບຈ່າຍປະຈໍາວັນ |
| ສໍາຄັນໃນຊີວິດ | ມາກມາຍຫຼາຍເລື່ອງ |
| ແຕ່ຄວນຄໍານຶງເບື້ອງ | ການຫາມາຈ່າຍ |
| ບໍ່ສ້າງຄວາມລໍາຄານເຮັດໃຫ້ ໃຜໆຕ້ອງເດືອດຮ້ອນ | ເມືອງບ້ານຈຶ່ງສະຫງົບ ຊອບແລ້ວ! |



ພັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສຽມທ້ຽນ

❊ *ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເລີ່ມເຂົ້າອາທິດທີສອງ ພອນຄຶກຄື້ນ ປານເຮືອຊ່ວງຕີຊ້າງບ້ານອງ ສສຊ ມີຄ່າເຫັນເພື່ອປົກປ້ອງ ຜົນປະໂຫຍດປອງປະຊາ ໂດຍສະເພາະການພັດທະນາ ເພີ່ນໄດ້ຈິງຈັງເອົ້າ ເລື່ອງເຂົ້າສານອາຫານແຫ້ງ ຂອງແພງທັງສາເຫດ ເຮັດແນວໃດປະຊາລາວຊິໄດ້ ມີສຸກພ້ອມພັດທະນາ ຊົມເຊີຍ!*

❊ *ຕະຫຼອດໄລຍະເວລາ 14 ອັບລັດຖະການ ທີ່ດໍາເນີນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX (156) ເພີ່ນເອົ້າ ສາຍດ່ວນຂອງສະພາ ໃຫ້ທ່ານອາໃຫຼມາ ສົ່ງສານຂໍ້ມູນເອົ້າ ເອົາບັນຫາຄາຊ້ອງ ສະໜອງໄປຍັງຄະນະ ເພື່ອປຶກສາຊອກຄົ້ນ ຫາທາງແກ້ຊ່ອຍກັບ ທ່ານເອີຍ! (ອີເມວ: Nalao.156@gmail.com; App:lao na)*

## ຊອບຍິ້ມ

# ພົ້ງດຶ່ງ

### ເລື່ອງ: ສອງໂຕ

ສົມສີ ນັ່ງເຮັດວຽກຢູ່ຫ້ອງການດ້ວຍຄວາມເມື່ອຍລ້າ; ໃຫລະສັບຂອງລາວກໍດັງຂຶ້ນ, ເປັນເບີຂອງຜູ້ເປັນແມ່ໂທຊອບຖາມດ້ວຍຄວາມເປັນຫ່ວງເປັນໄຍວ່າ: "ໄດ້ກັບບໍ່ລູກ"

ພໍແຕ່ໄດ້ຍິນຄໍານັ້ນ, ສົມສີ ກໍຕາແດງຄືບ້າຕາຊິໄຫຼພໍອະອອກມາ ດ້ວຍຄວາມຄິດຮອດແມ່ ແຕ່ວຽກງານກະຫຍຸ້ງຍາກຫຼາຍອີຫຼີ ກໍເລີຍກັດແຂ້ວອົດກັ້ນໄວ້, ແລ້ວເອົ້າວ່າ: "ບໍ່ໄດ້ກັບບ່າແມ່"

ແມ່ກໍຊົ້ງ ແລ້ວມິດໄປຄາວໜຶ່ງ, ແລ້ວຕອບກັບມາວ່າ: "ແມ່ກໍບໍ່ໄດ້ຊື້ກັບຫຼັງຄືກັນ ບໍ່ຊັບຖືກສອງໂຕແທ້ໆ" !!!



## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ລົ້ມຫຼືລຸກ ຢ່າໄປທຸກກັບຊີວິດ
ຖືກຫຼືຜິດ ຢ່າໄປຄິດກັບບັນຫາ
ຄົບບັນຫາ ຊົມຫຼືດ່າ ຢ່າໄປຮັບໃຫ້ກັບຄືນ

ລັດຖະສະພາຕ່າງປະເທດ

# ຍີ່ປຸ່ນອະນຸມັດຮ່າງກົດໝາຍ ຫ້າມໃຊ້ປ້າຍຕິດຕາມ

(Japantimes) - ວັນທີ 11 ພະຈິກຜ່ານມາ, ລັດຖະບານຍີ່ປຸ່ນ ໄດ້ອະນຸມັດການປັບປຸງກົດໝາຍຕ້ານການຕິດຕາມ (antistalking) ປີ 2021 ເພື່ອຫ້າມການໃຊ້ອຸປະກອນ GPS ເພື່ອເກັບກຳຂໍ້ມູນສະຖານທີ່ (location) ໂດຍບໍ່ໄດ້ຮັບອະນຸຍາດ, ແຕ່ຕອນນັ້ນຍັງບໍ່ກວມເອົາປ້າຍຕິດຕາມ(trackertag) ທີ່ອອກແບບມາເພື່ອຕິດຕາມສິ່ງຂອງມີຄ່າ; ນອກຈາກນັ້ນ, ກົດໝາຍຕໍ່ຕ້ານຄວາມຮຸນແຮງໃນຄອບຄົວ ກໍຈະຖືກປັບປຸງເພື່ອຮັບປະກັນວ່າການໃຊ້ປ້າຍຕິດຕາມ ຈະຖືກຫ້າມພາຍໃຕ້ຄຳສັ່ງຂອງສານ, ຂະນະດຽວກັນ ຈະອະນຸຍາດໃຫ້ຕຳຫຼວດເຂົ້າແຊກແຊງໂດຍບໍ່ຕ້ອງລໍຖ້າຄຳຮ້ອງຂໍຈາກຜູ້ຖືກຕິດຕາມ.

ໃນຊຸມປີມໍ່ໆມານີ້, ມີການລາຍງານການໃຊ້ປ້າຍຕິດຕາມຜ່ານສະມາດໂຟນ 196 ຄັ້ງ ໃນປີ 2023 ແລະ 370 ຄັ້ງ ໃນປີ 2024 ໂດຍຄາດຄະເນວ່າຈະເພີ່ມຂຶ້ນໃນປີ 2025, ອີງຕາມການລາຍງານຂອງສຳນັກງານຕຳຫຼວດແຫ່ງຊາດຍີ່ປຸ່ນ.



# Kazakhstan ຜ່ານຮ່າງກົດໝາຍຫ້າມສົ່ງເສີມ ຄວາມມັກທາງເພດທີ່ບໍ່ແມ່ນແບບດັ້ງເດີມ



(AFP) - ວັນທີ 12 ພະຈິກຜ່ານມາ, ສະພາຕໍ່າຄາຊັກສະຖານ ໄດ້ຜ່ານຮ່າງກົດໝາຍຫ້າມການສົ່ງເສີມຄວາມມັກທາງເພດທີ່ບໍ່ແມ່ນແບບດັ້ງເດີມ (non-traditional sexual orientation) ເຊິ່ງຍັງລໍຖ້າການອະນຸມັດຈາກສະພາສູງ; ເມື່ອມີຜົນບັງຄັບໃຊ້, ກົດໝາຍສະບັບນີ້ ຈະຫ້າມຂໍ້ມູນທີ່ມີເນື້ອໃນໂຄສະນາຊວນເຊື່ອກ່ຽວກັບການລ່ວງລະເມີດທາງເພດ ແລະ/ຫຼື ຄວາມມັກທາງເພດທີ່ບໍ່ແມ່ນແບບດັ້ງເດີມ ຢູ່ໃນສະຖານທີ່ສາທາລະນະ ແລະ ໃນສື່ມວນຊົນ.

ເຖິງຢ່າງໃດກໍຕາມ, ອົງການຮ່ວມມືສາກົນເພື່ອສິດທິມະນຸດ (International Partnership for Human Rights) ຮຽກຮ້ອງໃຫ້ສະມາຊິກລັດຖະສະພາ ປະຕິເສດຮ່າງກົດໝາຍດັ່ງກ່າວ, ໂດຍໃຫ້ເຫດຜົນວ່າ ຈະນຳໄປສູ່ການລະເມີດຂໍ້ຜູກມັດສາກົນດ້ານສິດທິມະນຸດຢ່າງເປີດເຜີຍ.

# ບັງກລາເທດ ຈະໃຊ້ແຜນຮັກສາ ຄວາມປອດໄພພິເສດໃນການເລືອກຕັ້ງທົ່ວໄປ



(Xinhua) - ພົນໂທ (ບຳນານ) ຈາຮັງກີຣ໌ ອາລຳ ໂຊດູຣີ (Jahangir Alam Chowdhury) ທີ່ປຶກສາຝ່າຍກິດຈະການພາຍໃນຂອງບັງກະລາເທດ ກ່າວເມື່ອວັນເສົາທີ 15 ພະຈິກຜ່ານມາວ່າ ບັງກລາເທດຈະໃຊ້ແຜນການຮັກສາຄວາມປອດໄພພິເສດເປັນເວລາ 9 ວັນ ສຳລັບການເລືອກຕັ້ງທົ່ວໄປຄັ້ງທີ 13 ເຊິ່ງກຳນົດຈັດຂຶ້ນໃນເດືອນກຸມພາປີໜ້າ.

ເຂົາກ່າວວ່າ ແຜນການດັ່ງກ່າວ ອາດມີການປັບປ່ຽນໄດ້ຕາມສະຖານະການທີ່ຂຶ້ນເກີດໃນປະເທດ; ປັດຈຸບັນ, ມີທະຫານບັງກລາເທດ 30,000 ຄົນ ພວມປະຕິບັດໜ້າທີ່ ແລະ ຈຳນວນຈະເພີ່ມຂຶ້ນເປັນເກືອບ 100,000 ຄົນ ເພື່ອຮັກສາຄວາມປອດໄພໃຫ້ແກ່ການເລືອກຕັ້ງ; ກອງກຳລັງຮັກສາຄວາມປອດໄພອື່ນໆກໍຈະຊ່ວຍຮັກສາຄວາມປອດໄພ ແລະ ຄວບຄຸມສະຖານະການໃນລະຫວ່າງການເລືອກຕັ້ງເຊັ່ນກັນ.

ການເລືອກຕັ້ງທົ່ວໄປຄັ້ງນີ້ ຈະເປັນຄັ້ງທຳອິດນັບຕັ້ງແຕ່ການລຸກຮື້ຂຶ້ນຄັ້ງໃຫຍ່ທີ່ໄດ້ໂຄ່ນລົ້ມອະດີດນາຍົກລັດຖະມົນຕີ ນາງ ເຊກ ຮາສີນາ (Sheikh Hasina) ເມື່ອປີ 2024.

# ປະທານາທິບໍດີປາກິດສະຖານ ລົງນາມປັບປຸງລັດຖະທຳມະນູນ



(Xinhua) - ວັນທີ 13 ພະຈິກຜ່ານມາ, ປະທານາທິບໍດີປາກິດສະຖານ ອາຊິຟ ອາລີ ຊາຣ໌ດາຣີ (Asif Ali Zardari) ໄດ້ລົງນາມອະນຸມັດປັບປຸງລັດຖະທຳມະນູນສະບັບທີ 27 ໂດຍຈະມີການປ່ຽນແປງຫຼາຍມາດຕາສຳຄັນ.

ການປັບປຸງຄັ້ງນີ້ ເຮັດໃຫ້ມີການປ່ຽນແປງທີ່ສຳຄັນຫຼາຍຢ່າງຕໍ່ລັດຖະທຳມະນູນ ໂດຍສະເພາະທີ່ກ່ຽວຂ້ອງກັບອຳນາດຕຸລາການ ແລະ ຕຳແໜ່ງສຳຄັນທາງລັດຖະທຳມະນູນ ລວມທັງການສ້າງຕັ້ງສານລັດຖະທຳມະນູນຂອງລັດຖະບານກາງ, ຕາມຮ່າງລັດຖະທຳມະນູນທີ່ປາກົດຢູ່ໃນເວັບໄຊຂອງລັດຖະສະພາ.

ການປັບປຸງ ຍັງໄດ້ກຳນົດລຳດັບຄວາມອາວຸໂສຂອງສານ, ສ້າງຄວາມເຂັ້ມແຂງໃຫ້ກັບມາດຕາ 6 ເພື່ອປ້ອງກັນການລົບລ້າງລັດຖະທຳມະນູນ, ຮັກສາໂຄງປະກອບການສາບານຕົນ ແລະ ຄວາມຕໍ່ເນື່ອງຂອງອົງການ, ເພີ່ມທະວີການແຍກອຳນາດລະຫວ່າງສານລັດຖະທຳມະນູນ ແລະ ສານອຸທອນທົ່ວໄປ.

ສະພາສູງ ແລະ ສະພາແຫ່ງຊາດ ຕາມລຳດັບ ໄດ້ຜ່ານການປັບປຸງດ້ວຍສຽງສ່ວນຫຼາຍ 2 ສ່ວນ 3 ໃນຕົ້ນອາທິດດຽວກັນ.

ການປັບປຸງມາດຕາ 243 ຂອງລັດຖະທຳມະນູນ ໄດ້ປ່ຽນຊື່ຕຳແໜ່ງສູງສຸດໃນກອງທັບບົກປາກິດສະຖານ ເປັນ "ຜູ້ບັນຊາການທະຫານບົກ ຄວບຕຳແໜ່ງຜູ້ບັນຊາການກອງກຳລັງປ້ອງກັນປະເທດ"; ຕາມການປັບປຸງນີ້, ປະທານຄະນະເສນາທິການຮ່ວມ ເຊິ່ງເປັນຕຳແໜ່ງສູງສຸດໃນກອງທັບປາກິດສະຖານ, ຈະຖືກຍົກເລີກໂດຍມີຜົນນັບແຕ່ວັນທີ 27 ພະຈິກ 2025 ເປັນຕົ້ນໄປ.

ຕາມການປັບປຸງໃນມາດຕາ 243 ແລະ 248, ຈະບໍ່ມີຂະບວນການໃນການຈັບກຸມ ຫຼື ຈຳຄຸກ ປະທານາທິບໍດີ, ຈອມພົນ, ຈອມພົນອາກາດ ແລະ ນາຍພົນເຮືອເອກຕະຫຼອດຊີວິດຂອງພວກເຂົາ; ການປັບປຸງມາດຕາ 243 ລະບຸວ່າ ເມື່ອໄດ້ຮັບການແຕ່ງຕັ້ງເປັນຈອມພົນ, ຈອມພົນອາກາດ ແລະ ນາຍພົນເຮືອເອກແລ້ວຈະຍັງຮັກສາຍົດ, ສິດທິພິເສດ ແລະ ຍັງຢູ່ໃນເຄື່ອງແບບຕະຫຼອດຊີວິດ.

ພາຍຫຼັງການລົງນາມອະນຸມັດຂອງປະທານາທິບໍດີ, ຄາດວ່າຈະສ້າງຕັ້ງສານລັດຖະທຳມະນູນຂອງລັດຖະບານກາງຢ່າງເປັນທາງການ ໂດຍປະທານາທິບໍດີຈະຈັດພິທີສາບານຕົນເຂົ້າຮັບຕຳແໜ່ງໃຫ້ແກ່ປະທານສານຄົນທຳອິດໃນບໍ່ເທົ່າໃດວັນຂ້າງໜ້າ.

ການປັບປຸງລັດຖະທຳມະນູນສະບັບທີ 27 ນີ້ ປະຕິບັດຕາມການປັບປຸງສະບັບທີ 26 ໃນປີ 2024 ແລະ ສະແດງເຖິງການປັບໂຄງສ້າງທາງຕຸລາການຄັ້ງສຳຄັນທີ່ສຸດຄັ້ງໜຶ່ງໃນປະຫວັດສາດລັດຖະທຳມະນູນຂອງປາກິດສະຖານ ໂດຍມີຈຸດປະສົງເພື່ອຍົກລະດັບການຕັດສິນຕາມລັດຖະທຳມະນູນ ແລະ ເພີ່ມທະວີການກວດສອບທາງສະຖາບັນຕໍ່ການກະທຳຜິດລັດຖະທຳມະນູນ.

ເຝົ້າເວົ້າ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

# ຊຸກຍູ້ສົ່ງເສີມໃຫ້ແມ່ຍິງ ມີບົດບາດສຳຄັນດ້ານການພັດທະນາ

ມີຂ່າວທີ່ເບິ່ງຄືເປັນເລື່ອງເຫຼືອເຊື່ອແຕ່ກໍເຊື່ອໄດ້ທີ່ບອກວ່າ ພຽງແຕ່ລຶບລ້າງຊ່ອງວ່າງການເຂົ້າເຖິງນະວັດຕະກຳດິຈິຕອນລ້ຳຍຸກລະຫວ່າງຍິງ-ຊາຍ ທີ່ຍັງມີຢູ່ໃນປັດຈຸບັນ, ແມ່ຍິງຈຳນວນ 343.5 ລ້ານຄົນໃນທົ່ວໂລກ ກໍຈະໄດ້ຮັບຜົນປະໂຫຍດຢ່າງມະຫາສານພາຍໃນປີ 2050; ນອກຈາກນັ້ນ, ຈຳນວນແມ່ຍິງອີກປະມານ 30 ລ້ານຄົນ ກໍຈະຖືກປົດແອກອອກຈາກຄວາມທຸກຍາກ, ການລຶບລ້າງຊ່ອງວ່າງດັ່ງກ່າວ ຍັງຈະສ້າງລາຍຮັບເຂົ້າຍອດຜະລິດຕະພັນ (ຈີດີພີ) ຂອງໂລກໄດ້ເຖິງ 1.5 ພັນຕື້ໂດລາສະຫະລັດອີກດ້ວຍ. ນີ້ບໍ່ແມ່ນການຕີລາຄາແບບລົມໆແລ້ງໆ ໃຫ້ຟັງມ່ວນຫູຊື່ໆ ແຕ່ຫາກແມ່ນເນື້ອໃນບົດລາຍງານຂອງຄະນະກຳມະການວ່າດ້ວຍກິດຈະການເສດຖະກິດ ແລະ ສັງຄົມ ຂອງອົງການສະຫະປະຊາຊາດ (ສປຊ) ທີ່ເປີດເຜີຍອອກມາຫວ່າງບໍ່ເທິງມານີ້ (ໜັງສືພິມວຽງຈັນທາມ 17 ກັນຍາ 2025) ນອກຈາກຜົນປະໂຫຍດທີ່ຈະໄດ້ຈາກການລຶບລ້າງຊ່ອງວ່າງການເຂົ້າເຖິງດິຈິຕອນລະຫວ່າງຍິງ-ຊາຍ ໃນທົ່ວໂລກແລ້ວ, ບົດລາຍງານຍັງຊີ້ບອກວ່າ ໃນປັດຈຸບັນ, ເດັກຍິງໃນທົ່ວໂລກທີ່ສຳເລັດການຮຽນຂັ້ນສາມັນສຶກສາ ໄດ້ເພີ່ມຂຶ້ນໃນຈຳນວນທີ່ບໍ່ເຄີຍມີມາກ່ອນ, ສ່ວນການເສຍຊີວິດຂອງຜູ້ເປັນແມ່ເວລາເກີດລູກ ກໍຫຼຸດລົງເກືອບ 40% (ໃນລະຫວ່າງປີ 2000-2023).

ອີກບັນຫາໜຶ່ງທີ່ຖືວ່າເປັນຂ່າວດີສຳລັບແມ່ຍິງໃນບັນດາປະເທດສະມາຊິກສະຫະພາບເອີຣົບ (EU) ນັ້ນ ກໍຄືນະໂຍບາຍຂອງ EU ເພື່ອຊຸກຍູ້ໃຫ້ເຫຼົ່ານັກທຸລະກິດເພດຍິງມີໂອກາດກ້າວໜ້າຂຶ້ນສູ່ຕຳແໜ່ງສູງໆ ເຊັ່ນ: ລະດັບຜູ້ຈັດການ, ອຳນວຍການ ກໍຄືກຳມະການໃນຄະນະບໍລິຫານງານບໍລິສັດໃຫຍ່ໆ; ນະໂຍບາຍຊຸກຍູ້ສົ່ງເສີມດັ່ງກ່າວນີ້ ໄດ້ຖືກກຳນົດອອກເມື່ອ 3 ປີຜ່ານມາ ໂດຍມີເປົ້າໝາຍຫຼຸດຜ່ອນສະພາບຫຼຸດໂຕນລະຫວ່າງນັກທຸລະກິດ ຫຼື ຜູ້ປະກອບການ ເພດຍິງ ແລະ ເພດຊາຍໃນຕຳແໜ່ງຜູ້ຈັດການບໍລິສັດ. ແຕ່ໃດໆມາ ຈຳນວນນັກທຸລະກິດເພດຊາຍໃນຕຳແໜ່ງລະດັບນາຍໃນ EU ລື່ນເພດຍິງແບບນຳບໍ່ທັນ; ຍ້ອນແນວນີ້ເອງ ທາງ EU ຈຶ່ງໄດ້ອອກນະໂຍບາຍໃນຮູບກົດໝາຍເພື່ອໄຂເສັ້ນທາງໃຫ້ນັກທຸລະກິດຍິງສາມາດກ້າວຂຶ້ນສູ່ຕຳແໜ່ງຜູ້ບໍລິຫານບໍລິສັດ, ໂຮງຈັກ, ໂຮງງານຂະໜາດໃຫຍ່ໆ. ເນື້ອໃນສຳຄັນຂອງກົດໝາຍສາມາດສະຫຼຸບເປັນ 3 ຂໍ້ດັ່ງລຸ່ມນີ້:

1. ເພີ່ມສັດສ່ວນຂອງນັກທຸລະກິດຍິງ ແລະ ນັກທຸລະກິດຈາກກຸ່ມຄົນດ້ອຍໂອກາດເຂົ້າໃນຕຳແໜ່ງກຳມະການບໍລິຫານຂອງບັນດາບໍລິສັດຈົດທະບຽນຕະຫຼາດຫຼັກຊັບ ໂດຍໄດ້ມີການກຳນົດຢ່າງລະອຽດວ່າ ໃນບໍລິສັດທີ່ມີພະນັກງານແຕ່ 250 ຄົນຂຶ້ນໄປ ຕ້ອງໃຫ້ມີແມ່ຍິງ ແລະ ຕົວແທນຊົນເຜົ່າສ່ວນນ້ອຍ ເປັນກຳມະການບໍລິຫານ ຈຳນວນ 40% ຫຼື ບໍ່ຕ່ຳກວ່າ 30% ຂອງຈຳນວນກຳມະການບໍລິຫານທັງໝົດ.

2. ເງື່ອນໄຂກໍຄືຂັ້ນຕອນໃນຂະບວນການຄັດເລືອກກຳມະການຄະນະບໍລິຫານງານຫົວໜ່ວຍທຸລະກິດໃຫຍ່ໆນັ້ນຕ້ອງຮັບປະກັນຄວາມໂປ່ງໃສ, ສະເໝີພາບ ແລະ ມີຄວາມຫຼາກຫຼາຍທາງເພດ; ໃນກໍລະນີຜູ້ສະໝັກເຂົ້າເປັນຄະນະນຳຂອງບໍລິສັດ ມີຄຸນສົມບັດເທົ່າທຽມກັນ ກໍຕ້ອງໃຫ້ບຸລິມະສິດເພດຍິງ ແລະ ຕົວແທນຄົນກຸ່ມນ້ອຍ.

3. ຕ້ອງມີການປະກາດບັນດາລາຍຊື່ບໍລິສັດທີ່ປະຕິບັດໄດ້ຕາມເປົ້າໝາຍຂອງກົດໝາຍ ໃຫ້ສາທາລະນະຊາບ ໄປພ້ອມໆກັນກັບການເຜີຍແຜ່ລາຍຊື່ຂອງບໍລິສັດທີ່ບໍ່ບັນລຸຕາມເປົ້າໝາຍ; ບໍລິສັດດັ່ງກ່າວຕ້ອງບອກສາເຫດທີ່ເຮັດບໍ່ໄດ້ ພ້ອມກັບວິທີແກ້ໄຂໃນຕໍ່ໜ້າ, ຖ້າບໍ່ມີເຫດຜົນພຽງພໍ ບໍລິສັດເຫຼົ່ານີ້ກໍອາດຈະຖືກປັບໃໝ.

ທະນາຄານພັດທະນາລາວ
LDB Bank




*#ບ່າວກະບື*

**ປ້າ**ບຸນແຕ້ມ ນັ່ງຢູ່ຮ້ານຂາຍເຝີດັງແຫ່ງໜຶ່ງໃນເມືອງ, ມັນເປັນເຝີຖ້ວຍທຳອິດໃນຊີວິດ ທີ່ປ້າສັ່ງມາກິນ. ການບໍລິການເປັນໄປຢ່າງວ່ອງໄວ, ແຕ່ເມື່ອແນມເບິ່ງຖ້ວຍເຝີ ປ້າຕ້ອງຫຼົ່ງຮ້ອງກົກອອກມາແບບຕົກອົກຕົກໃຈ. ປ້າຮ້ອງວ່າ: "ແມ່ນຫຍັງນີ້? ເຈົ້າເອົາຂີ້ກະເດືອນແປ ກັບລູກໝາກກະຖຸນ ມາຂ້າຂ້ອຍໃຫ້ຕາຍຊັ້ນບໍ...!!!".

## Do You Want To Kill Me?

*#BAOKBU*

Aunt Boon Taem was at the famous noodle soup restaurant in town. She ordered her first-ever noodle soup. The servie was quick but she shrieked frantically when she saw the soup. She said:

"What? do you want to kill me with these tape worms and sling-stot balls".

ຕາມພາສາ ກາຕູນ




● ໂດຍ : ພູຜາ




**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພົດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ